# ທົດສະດີ

# ການເມືອງ - ການປົກຄອງ

## ວາລະສານຄົ້ນຄວ້າຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ



- ເພີ່ມທະວີການພົວພັນຮ່ວມມືທາງການທູດກັບຕ່າງປະເທດ ຢູ່ ສປປ ລາວ.
- ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ຢູ່ປະເທດເຮົາ.
- ພັດທະນາວຽກງານຂໍ້ມູນຂ່າວສານ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ.

ປີທີ 28
ສະບັບທີ 230
ປະຈຳເດືອນ 08
ປີ 2024

# ສາລະບານ

ແສງໄພວອນ ບັນທະພອນ: ເພີ່ມທະວີການພົວພັນຮ່ວມມືທາງການທູດກັບຕ່າງປະເທດຢູ່ ສປປ ລາວ...... 1

ນ. ດາລຸນນີ ແກ້ວມະນີວົງ: ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ຢູ່ປະເທດເຮົາ...... 6

ຕາອ໊ອດ ແສນທະວີສຸກ: ພັດທະນາວຽກງານຂໍ້ມູນຂ່າວສານ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ...... 12

ຄຳອ້ວນ ອ່ອນພະຈັນ: ຍົກສູງຄວາມເປັນແບບຢ່າງນຳໜ້າຂອງຄະນະພັກ, ສະມາຊິກພັກ ຢູ່ແຂວງອຸດົມໄຊ...... 18

ຢີ້ງຈັ້ງ ຊາຟຸງ: ການກໍ່ສ້າງ-ບຳລຸງພະນັກງານ, ນັກຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນວິທະຍາສາດເສດຖະກິດ ແລະສັງຄົມແຫ່ງຊາດ...... 25

ສຸວັນນະ ສີຫາສຸກ: ບາງຜົນສຳເລັດກ່ຽວກັບວຽກງານຈັດຕັ້ງ ຢູ່ກະຊວງສາທາລະນະສຸກ...... 31

ລຳພູນ ເປ່ຍຊ້ອງ: ຍົກສູງຄຸນນະພາບວຽກງານໂຄສະນາອົບຮົມ ຢູ່ແຂວງໄຊສົມບູນ ໃນໄລຍະໃໝ່...... 38

ຫຼ້າບຸນໄທ ສໍສຳພັນ: ຍົກສູງຄຸນນະພາບວຽກງານຕິດຕາມ, ກວດກາຂອງສະພາປະຊາຊົນ ແຂວງຊຽງຂວາງ...... 44

ສີປະເສີດ ອິນທະວົງ: ເຊີດຊູຄວາມເປັນແບບຢ່າງນຳໜ້າ ຂອງພະນັກງານນຳພາ-ຄຸ້ມຄອງ ຢູ່ກະຊວງໂຍທາທິການ ແລະຂົນສົ່ງ...... 49

ນ. ສາຍສະໝອນ ສາຍຜາໄຊ: ເພີ່ມທະວີການນຳພາຂອງພັກຕໍ່ວຽກງານພະນັກງານ ຢູ່ແຂວງບໍ່ແກ້ວ...... 57

ຫຼຽກ ຄຳປະສົງ: ຍົກສູງຄຸນນະພາບການຄຸ້ມຄອງວຽກງານພະນັກງານ ຢູ່ແຂວງໄຊຍະບູລີ ໃຫ້ສອດຄ່ອງກັບໄລຍະໃໝ່...... 64

ບົວຂາວ ປານວິໄລ: ເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານຊາວໜຸ່ມ ຢູ່ເມືອງຊຽງເງິນ ແຂວງຫຼວງພະບາງ...... 70

ໂສພາ ໄຊຍະວົງສາ: ການຄຸ້ມຄອງຫົວໜ່ວຍທຸລະກິດການບໍລິການ ໂທລະຄົມມະນາຄົມ ຢູ່ນະຄອນຫຼວງວຽງຈັນ...... 71

ສົມອນ ສີວົງໄຊ: ຍົກສູງບົດບາດການກໍ່ສ້າງ-ບຳລຸງພະນັກງານຫຼັກແຫຼ່ງ ຢູ່ໂຮງຮຽນການເມືອງ ແລະການປົກຄອງແຂວງສາລະວັນ ໃຫ້ມີຄວາມເຂັ້ມແຂງ...... 76

ນ. ຈິດດາວອນ ສຸທຳມະວົງ: ຍົກສູງວຽກງານບໍລິການເກັບມ້ຽນຂີ້ເຫຍື້ອ ຢູ່ນະຄອນຫຼວງວຽງຈັນ...... 80

ປທ. ນ. ພາວັນ ວິລະວົງ: ການຈັດຕັ້ງປະຕິບັດວຽກງານ ຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ...... 86

**ຜູ້ຊີ້ນຳ**
ປທ. ນ. ບຸນມີ ຈຸນລະຈັກ
**ຄະນະບັນນາທິການ**
ປອ. ດາວສະຫວັນ ເຄືອມີໄຊ
ປອ. ສີສົມພອນ ວົງພະຈັນ
ປທ. ນ. ວະໄລລັກ ອະໄພ
**ກອງບັນນາທິການ**
ປທ. ສະນຸກສິນ ໂກສີພັນ
ນ. ພູວຽງ ແກ້ວສີມີໄຊ
ນ. ດອກໄມ້ ຈັນດາລາ
**ກອງເລຂາ**
ນ. ພູວຽງ ແກ້ວສີມີໄຊ
**ຈັດໜ້າ**
ນ. ດອກໄມ້ ຈັນດາລາ
**ຈຳໜ່າຍ**
ນ. ດອກໄມ້ ຈັນດາລາ
ລຳພູນ ຖຸນໄຊຍາ
**ຮູບພາບ**
ນ. ທິດດາວອນ ດວງປະເສີດ
**ແປສາລະບານ**
ລຳພູນ ຖຸນໄຊຍາ
**ຮູບພາບໜ້າປົກ**
ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເປີດຊຸດເຝິກອົບຮົມເລຂາພັກເມືອງ ແລະຄະນະປະຈຳພັກເມືອງ ຮຸ່ນທີ VII, ລະຫວ່າງວັນທີ 9-27 ກັນຍາ 2024
**ສຳນັກງານ**
ສູນຂໍ້ມູນຂ່າວສານ
ສະຖາບັນການເມືອງແລະ
ການປົກຄອງແຫ່ງຊາດ
ບ້ານທ່າງ່ອນ ເມືອງໄຊທານີ
ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ: 021 752352
020 29994161
**ອີເມລ:**
Valasan.nappa@yahoo.com
ເວບໄຊ: www.nappa.gov.la

# ເພີ່ມທະວີການພົວພັນຮ່ວມມືທາງການທູດກັບຕ່າງະເທດ ຢູ່ ສປປ ລາວ

ຂຽນໂດຍ: ແສງໄພວອນ ມັນທະພອນ

ການພົວພັນຮ່ວມມື ແລະການເຊື່ອມໂຍງກັບຕ່າງປະເທດເປັນທ່າອ່ຽງລວມຂອງຍຸກສະໄໝ, ແມ່ນໝາກຜົນຂອງການປ່ຽນແປງພາວະວິໄສຂອງໂລກເສດຖະກິດ-ສັງຄົມໂດຍພາກສ່ວນຕ່າງໆຂອງໂລກໄດ້ປ່ຽນຈາກສະພາບທີ່ຕັດຂາດຈາກກັນມາເປັນການພົວພັນກັນຫຼາຍຂຶ້ນກ້າວໄປສູ່ການຫັນປ່ຽນກາຍເປັນຍຸກສະໄໝໃໝ່ທີ່ມີການຕິດຕໍ່ສື່ສານທີ່ໄວ ແລະໄຮ້ພົມແດນ ເຊິ່ງຊ່ວຍໃຫ້ພວກເຮົາສາມາດຮັບຂໍ້ມູນຂ່າວສານ (ທັງອັນດີ ແລະອັນບໍ່ດີ) ໄດ້ຢ່າງວ່ອງໄວ, ແມ່ນຍຸກແຫ່ງການແຂ່ງຂັນຊອກຮູ້ຂໍ້ມູນຂ່າວສານ ແລະແຂ່ງຂັນທາງດ້ານເສດຖະກິດ. ສະນັ້ນ, ການພົວພັນຮ່ວມມືກັບຕ່າງປະເທດ, ຮັບໃຊ້ການພັດທະນາເສດຖະກິດແມ່ນວຽກງານທີ່ສຳຄັນຂອງການບໍລິຫານລັດ, ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ພັກ ແລະລັດເຮົາເວລາໃດກໍເອົາໃຈໃສ່ວຽກງານຕ່າງປະເທດ, ຫັນເຂົ້າສູ່ລວງເລິກເອົາການພົວພັນຮ່ວມມືດ້ານການເມືອງຕິດພັນກັບການຮ່ວມມືດ້ານເສດຖະກິດກັບບັນດາປະເທດເພື່ອນມິດຍຸດທະສາດ, ປະເທດໃກ້ຄຽງ ແລະປະເທດອື່ນໆໃນພາກພື້ນແລະສາກົນບົນພື້ນຖານຫຼັກການ ແລະນະໂຍບາຍການຕ່າງປະເທດອັນສະເໝີຕົ້ນສະເໝີປາຍ. ປະທານ ໄກສອນ ພົມວິຫານ ໄດ້ເນັ້ນໜັກວ່າ: "ພວກເຮົາບໍ່ໄດ້ອັດປະຕູຈັກເທື່ອມີແຕ່ຝ່າຍກົງກັນຂ້າມຍາມໃດກໍຊອກວິທີປິດລ້ອມພວກເຮົາ ແຕ່ພວກເຮົາໄດ້ເປັນເຈົ້າການເປີດກວ້າງການພົວພັນກັບບັນດານາໆປະເທດແຕ່ຫົວທີໂດຍບໍ່ຈຳແນກລະບອບການເມືອງ ແລະໄດ້ພະຍາຍາມຕໍ່ສູ້ມ້າງວົງປິດລ້ອມຂອງຝ່າຍກົງກັນຂ້າມສ້າງການພົວພັນສາກົນຢ່າງເປີດເຜີຍ ແລະກວ້າງຂວາງສູ່ມື້ນີ້, ບົນພື້ນຖານດັ່ງກ່າວນັ້ນ ວຽກງານການຕ່າງປະເທດໄດ້ເປັນວຽກງານຍຸດທະສາດເປັນການສ້າງເງື່ອນໄຂດຶງດູດນັກລົງທຶນຂອງຕ່າງປະເທດ ແລະມີຄວາມຈຳເປັນຕ້ອງມີການຮ່ວມມື ເພື່ອພັດທະນາເສດຖະກິດດ້ວຍຫຼາຍຮູບແບບ ແລະຫຼາຍວິທີທີ່ແຕກຕ່າງກັນ. ເປົ້າໝາຍສຳຄັນແມ່ນຍຶດໝັ້ນການປົກປັກຮັກສາຜົນປະໂຫຍດແລະຄວາມໝັ້ນຄົງຂອງຊາດ, ຮັກສາສັນຕິພາບ ແລະບົດບາດທາງການເມືອງ ແລະຍາດແຍ່ງຜົນປະໂຫຍດທາງດ້ານເສດຖະກິດອັນສູງສົ່ງມາໃຫ້ປະເທດຊາດ"(1).

ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກໄດ້ກຳນົດວ່າ: "ສືບຕໍ່ຍຶດໝັ້ນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ, ການຮ່ວມມືເພື່ອການພັດທະນາ ແລະຖືການທູດປ້ອງກັນເຫດເປັນທິດສຳຄັນ. ບົນພື້ນຖານນັ້ນສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືແບບຫຼາຍຝ່າຍ, ຫຼາຍຮູບແບບ, ຫຼາຍລະດັບລະຫວ່າງລັດກັບລັດ ແລະລະຫວ່າງພັກເຮົາກັບພັກການເມືອງຂອງຕ່າງປະເທດບົນພື້ນຖານເຄົາລົບເອກະລາດ, ອຳນາດອະທິປະໄຕເຊິ່ງກັນ ແລະກັນຕ່າງຝ່າຍຕ່າງມີຜົນປະໂຫຍດ"(2). ໂດຍຍຶດໝັ້ນໃນແນວທາງການຕ່າງປະເທດທີ່ສ້າງສັນຢ່າງສະເໝີຕົ້ນສະເໝີ

(1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ III, ປີ 1997. ຫນ້າ 351.
(2) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 81.

ປາຍ ແລະເຄື່ອນໄຫວຢ່າງຕັ້ງໜ້າໄດ້ເຮັດໃຫ້ເພື່ອນມິດຂອງ ສປປ ລາວ ນັບມື້ເພີ່ມຂຶ້ນ, ການພົວພັນຮ່ວມມືໄດ້ສືບຕໍ່ເປີດກວ້າງ "ປັດຈຸບັນ ສປປ ລາວ ມີສາຍພົວພັນການທູດກັບ 143 ປະເທດ, ມີສາຍພົວພັນກັບ 139 ພັກການເມືອງຈາກ 85 ປະເທດໃນທົ່ວໂລກ, ໄດ້ເຂົ້າເປັນສະມາຊິກອົງການຈັດຕັ້ງສາກົນ ແລະມີການປະກອບສ່ວນພັນທະຢ່າງເປັນປົກກະຕິຫຼາຍກວ່າ 130 ອົງການ, ມີສໍານັກງານຕາງໜ້າການທູດຢູ່ຕ່າງປະເທດ 40 ແຫ່ງຢູ່ 27 ປະເທດທົ່ວໂລກ; ໃນນັ້ນ, ມີສະຖານທູດຈໍານວນ 26 ແຫ່ງ, ສໍານັກງານຜູ້ຕາງໜ້າຖາວອນຈໍານວນ 3 ແຫ່ງ, ກົງສຸນໃຫຍ່ ຈໍານວນ 10 ແຫ່ງ ແລະຫ້ອງການກົງສູນ ຈໍານວນ 1 ແຫ່ງ; ມີກົງສູນໃຫຍ່ຕ່າງປະເທດປະຈໍາຢູ່ ສປປ ລາວທັງໝົດ 4 ແຫ່ງ, ຕາງໜ້າການທູດ 27 ສໍານັກງານ ແລະອົງການຈັດຕັ້ງສາກົນ 145 ອົງການໃຫ້ການຮ່ວມມື 51 ອົງການ"[1]. ຍຶດໝັ້ນແນວທາງຂອງພັກທີ່ວ່າ: ສັນຕິພາບ, ມິດຕະພາບ ແລະການຮ່ວມມື ເຊິ່ງໃນໄລຍະຜ່ານມາໄດ້ປະກອບສ່ວນອັນສໍາຄັນເຂົ້າໃນການປົກປັກຮັກສາ ແລະພັດທະນາປະເທດຊາດໄດ້ສ້າງເງື່ອນໄຂຫຼາຍດ້ານທີ່ເອື້ອອໍານວຍໃຫ້ແກ່ການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ ທັງເປັນການປຸກລະດົມຍາດແຍ່ງເອົາການຊ່ວຍເຫຼືອ, ການລົງທຶນຈາກຕ່າງປະເທດ ເພື່ອການພັດທະນາເຮັດໃຫ້ປະເທດຊາດມີຄວາມເຂັ້ມແຂງມີທ່ວງທ່າການຂະຫຍາຍຕົວດ້ວຍຈັງຫວະອັນໜັກແໜ້ນ ແລະຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງດີຂຶ້ນ, ອິດທິພົນ ແລະບົດບາດຂອງປະເທດເຮົາໄດ້ຮັບການເຊີດຊູສູງຂຶ້ນໃນເວທີພາກພື້ນ ແລະສາກົນ ເຊິ່ງໄລຍະຜ່ານມາສາມາດຍາດໄດ້ຜົນງານດັ່ງນີ້:

ໜຶ່ງ, ການພົວພັນຮ່ວມມືທາງດ້ານການເມືອງ: "ການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດໄດ້ກ້າວເຂົ້າສູ່ລວງເລິກ, ເປັນຮູບປະທໍາ ແລະມີຄຸນນະພາບໃໝ່ ໂດຍສະເພາະແມ່ນການສືບຕໍ່ເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານກັບ ສສ ຫວຽດນາມ, ການນໍາສູງສຸດຂອງພັກ-ລັດຂອງສອງປະເທດໄດ້ມີການໄປມາຫາສູ່ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງເປັນປົກກະຕິ, ອັນພົ້ນເດັ່ນໃນປີ 2020 ເປັນປີຄົບຮອບໃຫຍ່ວັນສໍາຄັນຕ່າງໆຂອງສອງປະເທດເຊິ່ງສອງຝ່າຍໄດ້ຮ່ວມກັນຈັດພິທີໂຮມຊຸມນຸມສະເຫຼີມສະຫຼອງວັນຊາດ ສສ ຫວຽດນາມຄົບຮອບ 75 ປີ ແລະວັນເກີດປະທານ ໂຮ່ຈີມິນ ຄົບຮອບ 130 ປີ, ສະຫຼອງວັນຊາດ ສປປ ລາວ ຄົບຮອບ 45 ປີ ແລະວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 100 ປີ. ໄດ້ເສີມຂະຫຍາຍຢ່າງຕໍ່ເນື່ອງສາຍພົວພັນແບບຄູ່ຮ່ວມມືຍຸດທະສາດຮອບດ້ານໝັ້ນຄົງຍາວນານຕາມທິດ 4 ດີ ກັບ ສປ ຈີນຄື: ບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ, ຄູ່ຮ່ວມມືທີ່ດີແລະການເປັນຄູ່ຮ່ວມຊະຕາກໍາລາວ-ຈີນ. ພ້ອມດຽວກັນນີ້, ສປ ຈີນ ຍັງສືບຕໍ່ເປັນຄູ່ການຄ້າທີ່ສໍາຄັນ ແລະເປັນປະເທດລົງທຶນລາຍໃຫຍ່ອັນດັບໜຶ່ງໃນ ສປປ ລາວ ເຊິ່ງມີມູນຄ່າການລົງທຶນຫຼາຍກວ່າ 12,6 ຕື້ ໂດລາສະຫະລັດ, ມີຫຼາຍ

[1] ເອກະສານຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ກະຊວງການຕ່າງປະເທດ, ຄັ້ງທີ VI, ປີ 2023, ໜ້າ 11.

ກວ່າ 791 ໂຄງການ”[1].

ການພົວພັນຮ່ວມມືກັບບັນດາປະເທດໃຫຍ່ສືບຕໍ່ໄດ້ຮັບການຍົກສູງຢ່າງໜັ້ນທ່ຽງ ເປັນຕົ້ນແມ່ນອາເມຣິກາ, ຣັດເຊຍ, ຍີ່ປຸ່ນ ແລະອີຢູ; ຮັກສາໄດ້ບັນຍາກາດການພົວພັນຮ່ວມມືທີ່ດີ, ໄວ້ເນື້ອເຊື່ອໃຈ ແລະຕ່າງຝ່າຍຕ່າງມີຜົນປະໂຫຍດກັບບັນດາປະເທດເພື່ອນມິດໃກ້ຄຽງ; ພ້ອມດຽວກັນນັ້ນ, ກໍໄດ້ເອົາໃຈໃສ່ຊຸກຍູ້ການຮ່ວມມືຢ່າງມີໝາກຜົນກັບປະເທດຄູ່ຮ່ວມມືທີ່ສໍາຄັນ ແລະເປີດກວ້າງການພົວພັນກັບປະເທດເພື່ອນມິດອື່ນໆຕາມຈັງຫວະ ແລະທ່າແຮງຂອງແຕ່ລະປະເທດເຊັ່ນ: “ການພົວພັນຮ່ວມມືກັບ ສ. ເກົາຫຼີ, ເບລາຣຸສ, ຮັງກາຣີ, ອິນເດຍ, ອັງກິດ, ອົດສະຕຣາລີ, ນິວຊີແລນ, ລຸກຊໍາບວກ, ເຢຍລະມັນ, ໄອຕຣີດສະວິດ ແລະປະເທດອື່ນໆ. ປັດຈຸບັນ ສປປ ລາວເຮົາ ໄດ້ສ້າງສາຍພົວພັນການທູດກັບ 143 ປະເທດ, ມີສາຍພົວພັນກັບ 139 ພັກການເມືອງຈາກ 85 ປະເທດໃນທົ່ວໂລກ, ໄດ້ເຂົ້າເປັນສະມາຊິກອົງການຈັດຕັ້ງສາກົນ ແລະມີການປະກອບສ່ວນພັນທະຢ່າງເປັນປົກກະຕິຫຼາຍກວ່າ 130 ອົງການ, ມີສໍານັກງານຕາງໜ້າການທູດຢູ່ຕ່າງປະເທດ 40 ແຫ່ງ; ໃນນັ້ນ, ມີສະຖານທູດ ຈໍານວນ 26 ແຫ່ງ, ສໍານັກງານຜູ້ຕາງໜ້າຖາວອນ ຈໍານວນ 3 ແຫ່ງ, ກົງສຸນໃຫຍ່ ຈໍານວນ 10 ແຫ່ງ ແລະຫ້ອງການກົງສຸນ ຈໍານວນ 1 ແຫ່ງ”[2].

ສອງ, ການຮ່ວມມືທາງດ້ານເສດຖະກິດ: ດ້ານການຄ້າ, ການບໍລິການ ແລະການລົງທຶນໄດ້ມີການປັບປຸງນິຕິກໍາຕ່າງໆ ແລະເຊັນສັນຍາຮ່ວມມືກັບຫຼາຍປະເທດໃນໂລກ ເປັນຕົ້ນແມ່ຄື: ປະເທດເຮົາໄດ້ເຊັນສັນຍາຮ່ວມມືສອງຝ່າຍກ່ຽວກັບເສດຖະກິດ ແລະການຄ້າກັບ 16 ປະເທດຄື: ມົງໂກລີ, ໄທ, ມຽນມາ, ສ ເກົາຫຼີ, ສປ ຈີນ, ສສ ຫວຽດນາມ, ກໍາປູເຈຍ, ມາເລເຊຍ, ອິນເດຍ, ລັດເຊຍ, ເບລາຣຸສ, ອາກຊັງຕິນ, ອາເມຣິກາ, ຕວກກີ, ເຢຍລະມັນ ແລະກູເວດ; ໄດ້ເຊັນສັນຍາຮ່ວມມືການຄ້າຫຼາຍຝ່າຍ-ຫຼາຍຂອບ ສັນຍາໃນຂອບການເຂົ້າຮ່ວມປະຊາຄົມອາຊຽນ, ສໍາເລັດການຮ່ວມລົງນາມໃນສັນຍາຫຼາຍດ້ານຄື: ການຄ້າດ້ານຜະລິດຕະພັນອາຊຽນ (ATIGA), ການບໍລິການ (AFAS), ການຮ່ວມລົງນາມໃນສັນຍາການລົງທຶນອາຊຽນ (ACIA); ສໍາເລັດການເຈລະຈາ ແລະໄດ້ລົງນາມໃນສັນຍາການຄ້າດ້ານການບໍລິການອາຊຽນ ໂດຍເປີດຂະແໜງບໍລິການການທູດທີ 10; ສໍາເລັດການເຈລະຈາເຂດການຄ້າເສລີອາຊຽນ-ສປ ຈີນ, ອາຊຽນ+6 ແລະອາຊຽນ-ຍີ່ປຸ່ນ; ສໍາເລັດການຮ່ວມລົງນາມໃນສັນຍາວ່າດ້ວຍການສ້າງຕັ້ງເຂດການຄ້າເສລີ ລະຫວ່າງ ອາຊຽນ-ອົດສະຕຣາລີ ແລະນິວຊີແລນ ແລະດ້ານຜະລິດຕະພັນອາຊຽນ-ອິນເດຍ; ສໍາເລັດການຮ່ວມລົງນາມໃນສັນຍາການລົງທຶນ ລະຫວ່າງອາຊຽນ-ສ. ເກົາຫຼີ; ສໍາເລັດການສ້າງບົດສຶກສາຄວາມເປັນໄປໄດ້ໃນການສ້າງເຂດການຄ້າເສລີອາຊຽນ+3 (EAFTA) ແລະອາຊຽນ+6 (CEPEA). ໃນທ້າຍປີ 2020 ໄດ້ລົງນາມ (RCEP) ເຊິ່ງເປັນສົນທິສັນຍາການຄ້າທີ່ໃຫຍ່ທີ່ສຸດຂອງໂລກ; ປັດຈຸບັນ ສປປ ລາວ ມີການພົວພັນການຄ້າກັບຫຼາຍກວ່າ 80 ປະເທດໃນໂລກ ທີ່ພົ້ນເດັ່ນແມ່ນການເຂົ້າເປັນສະມາຊິກຂອງອົງການ ການຄ້າໂລກໃນຕົ້ນປີ 2013. ການ

[1], [2] ເອກະສານກອງປະຊຸມວຽກງານການຕ່າງປະເທດຄັ້ງທີ 14, ປີ 2019, ໜ້າ 86.

ເຊື່ອມໂຍງເສດຖະກິດທັງໃນກອບພາກພື້ນ ແລະສາກົນ ເຊິ່ງໂດຍລວມແລ້ວແມ່ນມີຈຸດປະສົງເປີດກວ້າງການຮ່ວມມືທາງດ້ານການຄ້າ ແລະການລົງທຶນກັບຫຼາຍປະເທດ ໂດຍຜ່ານຂະບວນການຫຼຸດຜ່ອນອັດຕາພາສີ ແລະສິ່ງກີດຂວາງທາງດ້ານການຄ້າ ແລະການບໍລິການ, ການອຳນວຍຄວາມສະດວກໃຫ້ກັບການຄ້າ ແລະການລົງທຶນ ລະຫວ່າງປະເທດສະມາຊິກດ້ວຍກັນ. ໃນໄລຍະປີ 2017-2019 ປະເທດເຮົາສາມາດຂົນຂວາຍ, ຍາດແຍ່ງທຶນຮອນ ແລະການຊ່ວຍເຫຼືອຈາກຕ່າງປະເທດ ເປັນຕົ້ນແມ່ນທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ລວມມູນຄ່າທັງໝົດຫຼາຍກວ່າ 22.000 ຕື້ກີບ; ການລົງທຶນໂດຍກົງຈາກຕ່າງປະເທດ (FIDI) ມີມູນຄ່າທັງໝົດຫຼາຍກວ່າ 51.000 ຕື້ກີບ ແລະບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານໄດ້ໃຫ້ການຊ່ວຍເຫຼືອຈັດຕັ້ງປະຕິບັດທັງໝົດ 288 ໂຄງການ ມີມູນຄ່າປະມານ 9.000 ຕື້ກີບ.

ສາມ, ການພົວພັນຮ່ວມມືທາງດ້ານວັດທະນະທຳ: ການເຄື່ອນໄຫວການຕ່າງປະເທດທາງດ້ານວັດທະນະທຳໄດ້ມີຜົນສຳເລັດອັນໃໝ່ ເປັນຕົ້ນແມ່ນສຳເລັດການຈັດງານສັບປະດາວັດທະນະທຳພາຍໃນປະເທດ ແລະຕ່າງປະເທດ,ການເປີດປີທ່ອງທ່ຽວລາວ ປີ 2018, ປີ ທ່ອງທ່ຽວລາວ-ຈີນ 2019. ອັນພົ້ນເດັ່ນ ອົງການອຸຍແນັສໂກໄດ້ຮັບຮອງເອົາແຄນລາວ ແລະທົ່ງໄຫຫີນຊຽງຂວາງເຂົ້າເປັນມໍລະດົກໂລກທາງດ້ານວັດທະນະທຳໃນປີ 2018 ແລະປີ 2019 ຕາມລຳດັບ ເຊິ່ງກາຍເປັນສິ່ງເອກອ້າງທະນົງໃຈຂອງຊາວລາວທັງຊາດ. ຜ່ານການເຄື່ອນໄຫວຂົນຂວາຍຕ່າງໆບວກກັບການເປັນເຈົ້າພາບຈັດຫຼາຍກອງປະຊຸມສາກົນທີ່ສຳຄັນໄດ້ເຮັດໃຫ້ສາກົນຮັບຮູ້ກ່ຽວກັບປະເທດເຮົາຫຼາຍຂຶ້ນ ແລະສາມາດປະກອບສ່ວນເຂົ້າໃນການດຶງດູດນັກທ່ອງທ່ຽວເຂົ້າມາທ່ອງທ່ຽວຢູ່ລາວປີໜຶ່ງຫຼາຍກວ່າ 4 ລ້ານຄົນ.

ໃນໄລຍະຜ່ານມາການເຄື່ອນໄຫວວຽກງານການຕ່າງປະເທດຂອງປະເທດເຮົາເຖິງວ່າໄດ້ມີຜົນສຳເລັດໃນຫຼາຍດ້ານ; ພ້ອມສາມາດດຶງດູດ ແລະຍາດການລົງທຶນ, ການຊ່ວຍເຫຼືອໃນດ້ານຕ່າງໆເປັນຢ່າງດີກໍຕາມ, ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດໃນໄລຍະໃໝ່ເຫັນວ່າຍັງບໍ່ທັນຕອບສະໜອງໄດ້ຕາມຈຸດປະສົງເປົ້າໝາຍ ເຊິ່ງມີບາງດ້ານທີ່ຈະຕ້ອງສຸມໃສ່ແກ້ໄຂດັ່ງນີ້:

1). ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມມືອັນເປັນພື້ນຖານກັບບັນດາປະເທດເພື່ອນມິດຍຸດທະສາດ, ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມກັບບັນດາປະເທດອ້າຍນ້ອງ, ການພົວພັນມິດຕະພາບອັນດີກັບບັນດາປະເທດເພື່ອນມິດໃກ້ຄຽງ ແລະສາຍພົວພັນປະເທດເພື່ອນມິດອື່ນໆຍັງບໍ່ທັນເຂົ້າສູ່ລວງເລິກ ແລະມີປະສິດທິຜົນສູງເທົ່າທີ່ຄວນ.

2).ການເຄື່ອນໄຫວວຽກງານການຕ່າງປະເທດຂອງພວກເຮົາໃນໄລຍະຜ່ານມາແມ່ນສາມາດບຸກທະລຸໄດ້ພຽງແຕ່ທາງດ້ານປະລິມານ, ຍັງບໍ່ທັນບຸກທະລຸໄດ້ທາງດ້ານຄຸນນະພາບເທື່ອ; ການກຽມຄວາມພ້ອມ ແລະການສ້າງຄວາມເຂັ້ມແຂງດ້ານຕ່າງໆຢູ່ພາຍໃນປະເທດບໍ່ທັນໄປຄຽງຄູ່ກັບການເຊື່ອມໂຍງ, ການເຊື່ອມຈອດກັບພາກພື້ນ ແລະການເປີດ

ກວ້າງການພົວພັນຮ່ວມມືກັບສາກົນ.

3). ພະນັກງານທີ່ຮັບຜິດຊອບການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດເພື່ອນມິດໃກ້ຄຽງ ຍັງບໍ່ທັນກຳແໜ້ນແນວທາງການພົວພັນຮ່ວມມືກັບຕ່າງປະເທດຢ່າງເລິກເຊິ່ງເຖິງຖອງ, ດ້ານຄວາມຮູ້ພາສາຕ່າງປະເທດສ່ວນຫຼາຍແມ່ນຮູ້ແຕ່ພາສາອັງກິດໃນລະດັບໃດໜຶ່ງເທົ່ານັ້ນບໍ່ສາມາດຕອບສະໜອງຂອງວຽກງານກໍຄືໜ້າທີ່ການເມືອງເທົ່າທີ່ຄວນ.

ເພື່ອເຮັດໃຫ້ການພົວພັນຮ່ວມມືກັບຕ່າງປະເທດຕິດພັນກັບການພັດທະນາເສດຖະກິດຢູ່ປະເທດເຮົາໃນຕໍ່ໜ້າມີຄວາມໜັກແໜ້ນ, ເຂັ້ມແຂງ ແລະມີຄຸນນະພາບສາມາດຕອບສະໜອງໄດ້ຕາມແຜນຍຸດທະສາດການພົວພັນຮ່ວມມືກັບຕ່າງປະເທດສູງຂຶ້ນນັ້ນເຫັນວ່າຄວນເອົາໃຈໃສ່ບາງດ້ານດັ່ງນີ້:

ໜຶ່ງ, ເພີ່ມທະວີຄວາມເປັນເຈົ້າການໃຫ້ເຂົ້າສູ່ລວງເລິກ ແລະມີປະສິດທິຜົນຕົວຈິງ, ຂະຫຍາຍສາຍພົວພັນແບບພິເສດກັບ ສສ ຫວຽດນາມ ແລະເພີ່ມທະວີການເຄື່ອນໄຫວໃນກອບອາຊຽນ; ເສີມຂະຫຍາຍການພົວພັນຮ່ວມມືກັບບັນດາປະເທດໃຫຍ່ຢ່າງໝັ້ນທ່ຽງ; ເປີດກວ້າງການພົວພັນກັບ ສສ ຫວຽດນາມ ແລະການພົວພັນຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງຍາວນານກັບ ສປ ຈີນ ຕິດພັນກັບແຜນແມ່ບົດຄູ່ຮ່ວມຊະຕາກຳລາວ-ຈີນ ໃຫ້ມີຄຸນນະພາບອັນໃໝ່. ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະການຮ່ວມມືທີ່ດີ ມີໝາກຜົນກັບປະເທດເພື່ອນມິດໃກ້ຄຽງ; ເປີດກວ້າງການພົວພັນຮ່ວມມືກັບປະເທດຕ່າງໆຕາມຈັງຫວະທີ່ເໝາະສົມ, ແກ້ໄຂການພົວພັນກັບປະເທດຕ່າງໆຢ່າງຄ່ອງແຄ້ວ ແລະຮັບປະກັນຜົນປະໂຫຍດແຫ່ງຊາດຂອງພວກເຮົາ.

ສອງ, ຄວນສືບຕໍ່ບຸກທະລຸທາງດ້ານຈິນຕະນາການຢ່າງແຂງແຮງ, ຍົກສູງຄວາມຮັບຜິດຊອບຂອງບັນດາຂະແໜງການໃນການປັບປຸງແກ້ໄຂບັນດາລະບຽບ, ກົນໄກບໍລິຫານທີ່ກີດໜ່ວງຖ່ວງດຶງ, ສ້າງຄວາມໂປ່ງໃສ, ແກ້ໄຂແບບແຜນວິທີເຮັດວຽກ, ປັບປຸງການບໍລິການຜ່ານປະຕູດຽວ, ປັບປຸງສະພາບແວດລ້ອມການດຳເນີນທຸລະກິດຕາມທິດຊີ້ນຳຂອງລັດຖະບານ ເພື່ອຮອງຮັບການເຊື່ອມໂຍງພາກພື້ນ ແລະສາກົນ; ເພີ່ມໂອກາດໃນການຂົນຂວາຍດຶງດູດການຊ່ວຍເຫຼືອທາງການເພື່ອການພັດທະນາ ກໍຄືການລົງທຶນໂດຍກົງຈາກຕ່າງປະເທດໃຫ້ນັບມື້ຫຼາຍຂຶ້ນ.

ສາມ, ຍົກສູງຄຸນນະພາບການກໍ່ສ້າງພະນັກງານທີ່ຮັບຜິດຊອບການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດເພື່ອນມິດໃກ້ຄຽງ ແລະສາຍພົວພັນປະເທດ ເພື່ອນມິດອື່ນໆໃຫ້ຕອບສະໜອງໄດ້ທັງປະລິມານ ແລະຄຸນນະພາບເຊັ່ນ: ພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວນີ້ຕ້ອງກຳແໜ້ນຍຸດທະສາດ, ແນວທາງການພົວພັນຮ່ວມມືກັບຕ່າງປະເທດຂອງປະເທດເຮົາ; ພ້ອມນັ້ນ, ຄວາມຮູ້ ແລະຄວາມສາມາດດ້ານພາສາອັງກິດຕ້ອງເຂົ້າໃຈຢ່າງເຖິງຖອງເປັນຕົ້ນແມ່ນໃຫ້ສາມາດຂີດຂຽນເອກະສານທີ່ສຳຄັນຕ່າງໆໄດ້ເພື່ອເຮັດໃຫ້ເນື້ອໃນເອກະສານເປັນໄປຕາມເນື້ອໃນຈິດໃຈ, ຈຸດປະສົງເປົ້າໝາຍຂອງປະເທດເຮົາ.

ສັງລວມແລ້ວ, ວຽກງານພົວພັນຕ່າງປະເທດຂອງປະເທດເຮົາແມ່ນມີຄວາມໝາຍຄວາມສຳຄັນຕັດສິນຜົນສຳເລັດໃນການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ...



ອ່ານຕໍ່ໜ້າ 94

# ພັດທະນາວຽກງານຂໍ້ມູນຂ່າວສານ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ

ຂຽນໂດຍ: ຕາອ໋ອດ ແສນທະວິສຸກ

ຂໍ້ມູນຂ່າວສານແມ່ນອົງປະກອບໜຶ່ງທີ່ສຳຄັນຂອງທຸກໆຂະແໜງການ, ເປັນພື້ນຖານຄວາມຮູ້ປະກອບໃຫ້ແກ່ຄົນເຮົາໄດ້ມີຄວາມສະຫຼາດຮອບຮູ້ ແລະເສີມສ້າງຄວາມສາມາດ; ຖ້າຫາກຄົນເຮົາໄດ້ຮັບຂໍ້ມູນຂ່າວສານທີ່ດີ, ວ່ອງໄວ, ກ້າວໜ້າ ແລະທັນສະພາບການກໍຈະເປັນພື້ນຖານແຫ່ງຄວາມຈະເລີນກ້າວໜ້າ ແລະຂະຫຍາຍຕົວຂອງສັງຄົມມະນຸດ. ການພັດທະນາວຽກງານຂໍ້ມູນຂ່າວສານ ເພື່ອເຮັດໃຫ້ການສະໜອງຂໍ້ມູນຂ່າວສານເຂົ້າມາຊ່ວຍໃນການຕັດສິນໃຈ ໄດ້ງ່າຍຂຶ້ນ ຍ້ອນວ່າການຕັດສິນໃຈເປັນກິດຈະກຳທີ່ສຳຄັນ ຖ້າຂໍ້ມູນຂ່າວສານຖືກຕ້ອງ, ຊັດເຈນການຕັດສິນໃຈກໍຈະຖືກຕ້ອງ ແລະວ່ອງໄວ. ກົງກັນຂ້າມ, ຖ້າຂໍ້ມູນທີ່ສະໜອງໃຫ້ຜິດພາດ, ບໍ່ຈະແຈ້ງ ແລະບໍ່ລະອຽດກໍເຮັດໃຫ້ການຕັດສິນໃຈມີຄວາມຜິດພາດ ແລະຈະກໍ່ໃຫ້ເກີດຜົນເສຍຫາຍຕາມມາຢ່າງຫຼວງຫຼາຍ ອາດຈະເຮັດໃຫ້ສູນເສຍໂອກາດໃນການແຂ່ງຂັນ ຫຼື ການແກ້ໄຂບັນຫາໃນລະດັບຊາດ.

ໂດຍເຫັນໄດ້ຄວາມໝາຍ, ຄວາມສຳຄັນຂອງວຽກງານຂໍ້ມູນຂ່າວສານ; ພັກ ແລະລັດເຮົາ ຈຶ່ງໄດ້ໃຫ້ຄວາມສຳຄັນຕໍ່ກັບການພັດທະນາວຽກງານຂໍ້ມູນຂ່າວສານໂດຍຖືເອົາວຽກງານຂໍ້ມູນຂ່າວສານສອດທ້ອຍເຂົ້າທຸກຂົງເຂດວຽກງານ ເພາະວ່າຂໍ້ມູນຂ່າວສານທີ່ມີຄຸນນະພາບຈະເປັນຂໍກຸນແຈທີ່ໄຂຊ່ອງທາງໃຫ້ແກ່ທຸກວຽກງານ, ທຸກຂະແໜງການກໍຄືການພັດທະນາປະເທດຊາດ ໃຫ້ກ້າວໄປສູ່ຄວາມສີວິໄລໃນອະນາຄົດ; ວຽກງານຂໍ້ມູນຂ່າວສານໄດ້ຮັບການພັດທະນາໃຫ້ມີຄຸນນະພາບສູງເທົ່າໃດ ຍິ່ງຈະເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ປະເທດຊາດຂອງພວກເຮົາໃຫ້ມີຄວາມກ້າວໜ້າສີວິໄລ, ທັນສະໄໝ, ມີຄວາມສະດວກໃນການພົວພັນແລກປ່ຽນຂໍ້ມູນຂ່າວສານ ທັງຢູ່ພາຍໃນ ແລະຕ່າງປະເທດ ໂດຍສະເພາະແມ່ນ "ດ້ານຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວທີ່ໄດ້ນຳໃຊ້ລະບົບຂໍ້ມູນຂ່າວສານທີ່ທັນສະໄໝເຮັດໃຫ້ວຽກງານການໂຄສະນາແນວທາງຂອງພັກ-ລັດຖະບານມີຄວາມວ່ອງໄວຂຶ້ນກວ່າເກົ່າ"[1].

ວຽກງານຂໍ້ມູນຂ່າວສານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດແມ່ນຂຶ້ນກັບຄວາມຮັບຜິດຊອບຂອງສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ. ສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງແມ່ນອົງການໜຶ່ງທີ່ທຽບເທົ່າກົມ "ມີບົດບາດເປັນເສນາທິການໃຫ້ກັບສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໃນການບໍລິການສະໜອງຂໍ້ມູນຂ່າວສານທາງດ້ານການເມືອງ-ການປົກຄອງ, ການບໍລິການຂໍ້ມູນຂ່າວສານຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ການຮຽນ-ການສອນຂອງພະນັກງານ, ຄູ-ອາຈານ, ນັກສຶກສາ, ນັກຄົ້ນຄວ້າ, ນັກປັນຍາ

[1] ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 106.

ຊົນ ທັງພາຍໃນ ແລະນອກສະຖາບັນ”[1]. ປັດຈຸບັນສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງປະກອບມີ 3 ພະແນກຄື: ພະແນກຫໍສະໝຸດ, ພະແນກວາລະສານ ແລະພະແນກຄົ້ນຄວ້າວິໄຈຂ່າວ; ມີພະນັກງານ, ຄູ-ອາຈານທັງໝົດ 23 ທ່ານ, ຍິງ 13 ທ່ານ; (ໄປຮຽນຕໍ່ພາຍໃນ 1 ທ່ານ, ຕ່າງປະເທດ 3 ທ່ານ, ຍິງ 2 ທ່ານ); ມີໜ້າຕົວຈິງ ຈຳນວນ 19 ທ່ານ, ຍິງ 11 ທ່ານ; ໃນນີ້, ມີຄະນະສູນຈຳນວນ 3 ທ່ານ, ຍິງ 1 ທ່ານ, ຫົວໜ້າພະແນກ ຈຳນວນ 1 ທ່ານ, ຮອງຫົວໜ້າພະແນກຈຳນວນ 3 ທ່ານ, ຍິງ 2 ທ່ານ, ພະນັກງານວິຊາການ ຈຳນວນ 12 ທ່ານ, ຍິງ 8 ທ່ານ; ດ້ານລະດັບການສຶກສາປະລິນຍາໂທ ຈຳນວນ 7 ທ່ານ, ຍິງ 2 ທ່ານ ແລະປະລິນຍາຕີ ຈຳນວນ 12 ທ່ານ, ຍິງ 9 ທ່ານ. ໃນໄລຍະຜ່ານມາຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໄດ້ເອົາໃຈໃສ່ພັດທະນາວຽກງານຂໍ້ມູນຂ່າວສານໃຫ້ດີຂຶ້ນເປັນລຳດັບ ນັບແຕ່ປີ 2021-2023 ມີຜົນສຳເລັດດັ່ງນີ້:

- ວຽກງານຫໍສະໝຸດ: ໄດ້ສະໜອງການໃຫ້ການບໍລິການຢືມ-ສົ່ງປຶ້ມ, ວາລະສານ, ບໍລິການ WIFI (ຟຣີ), ບົດປ້ອງກັນຈົບຂັ້ນ ແລະບົດວິທະຍານິພົນທຸກຮຸ່ນ, ທຸກລະບົບ, ບໍລິການຫ້ອງອ່ານການນຳ, ຫ້ອງຄົ້ນຄວ້າສົນທະນາເປັນກຸ່ມໃຫ້ນັກສຶກສາ, ນັກຄົ້ນຄວ້າ, ພະນັກງານ, ຄູ-ອາຈານ ທັງພາຍໃນ ແລະພາຍນອກສະຖາບັນ “ໄດ້ທັງໝົດ 228.363 ເທື່ອຄົນ; ໃນນັ້ນ, ມີພະນັກງານ, ຄູ-ອາຈານ ຈຳນວນ 273 ເທື່ອຄົນ ສາມາດປະຕິບັດໄດ້ 45,5%; ຮັບປຶ້ມເຂົ້າໃໝ່ໄດ້ 4.669 ຫົວ; ຮັບວາລະສານເຂົ້າໃໝ່ 9.559 ສະບັບ, ລົງທະບຽນປຶ້ມເຂົ້າໂປຣແກຣມ PMB ໄດ້ 3.515 ຫົວ ແລະວາລະສານເຂົ້າໂປຣແກຣມ PMB ໄດ້ 1.773 ສະບັບ; ໄດ້ຮັບບົດປ້ອງກັນຈົບຂັ້ນ ແລະລົງທະບຽນບົດປ້ອງກັນຈົບຂັ້ນຂອງນັກສຶກສາຈຳນວນ 584 ຫົວ; ອອກບັດສະມາຊິກຫໍສະໝຸດ ແລະລົງທະບຽນບັດເຂົ້າໂປຣແກຣມ PMB ຈຳນວນ 6.064 ບັດ ແລະໄດ້ແຈກຢາຍໜັງສືພິມໃຫ້ແກ່ບັນດາກົມ, ຄະນະວິຊາຕ່າງໆ ພາຍໃນສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຢ່າງເປັນປົກກະຕິ”[2].

- ວຽກງານວາລະສານ: ເຮັດໜ້າທີ່ບັນນາທິການ, ກວດແກ້ບົດວາລະສານເປັນຕົ້ນແມ່ນບົດນຳ, ບົດຄວາມຂົງເຂດການເມືອງ, ການປົກຄອງ ແລະຂົງເຂດເສດຖະກິດ, ຄຸ້ມຄອງ ແລະປະສານງານວຽກງານທີ່ພົວພັນກັບບົດວາລະສານເຊັ່ນ: ການຮັບບົດ-ສົ່ງບົດ ແລະການຄັດເລືອກບົດລົງເວບໄຊ, ນັບແຕ່ປີ 2021-2023 “ສາມາດຈັດພິມວາລະສານໄດ້ 37 ສະບັບ (ວາລະສານສະບັບພິເສດຈຳນວນ 1 ສະບັບ) ມີ 55.500 ຫົວ, ປະກອບມີ 408 ຫົວບົດ, ມີບົດລົງວາລະສານທັງໝົດ 399 ຫົວບົດ; ໃນນັ້ນ, ບົດຂອງຄູ-ອາຈານຈຳນວນ 171 ບົດ, ບົດຂອງນັກສຶກສາຈຳນວນ 509 ບົດ ແລະບັນດາພະນັກງານ, ຄູອາຈານໃນຂອບເຂດທົ່ວປະເທດກໍໄດ້ສົ່ງບົດມາລົງໄດ້ 66 ບົດ. ເນື້ອໃນວາລະສານມີຄວາມອຸດົມສົມບູນ, ຫຼາກຫຼາຍ, ສາມາດຕອບແກ້ບັນຫາທີ່ສັງຄົມຕ້ອງການ ທັງເປັນກະບອກສຽງໃຫ້

[1] ເອກະສານຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ, ເລກທີ 398 ສມປຊ, ລົງວັນທີ 13.5.2020.

[2] ບົດສະຫຼຸບການເຄື່ອນໄຫວວຽກງານ 3 ປີ (2021-2023) ແລະທິດທາງແຜນການ 5 ປີ 2025-2030 ຂອງສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ.




**ການບໍລິການຂໍ້ມູນຂ່າວສານໃຫ້ແກ່ນັກສຶກສາທຸກຮຸ່ນ, ທຸກລະບົບ ຂອງສູນຂໍ້ມູນຂາວສານການເມືອງ ແລະການປົກຄອງ**




ແກ່ພັກໃນການເຜີຍແຜ່ມະຕິ, ຄຳສັ່ງ ແລະ ແນວທາງທີ່ຂັ້ນເທິງວາງອອກແຕ່ລະໄລຍະ”[1].

- ວຽກງານຄົ້ນຄວ້າວິໄຈຂ່າວ: ເຮັດໜ້າທີ່ເກັບກຳ, ຮິບໂຮມ, ສັງລວມຮຽບຮຽງ, ແປ ແລະຕີພິມຄືນບັນດາບົດໂອ້ລົມຂອງການນຳຂັ້ນສູງ; ເກັບກຳນິຕິກຳ, ບົດຄົ້ນຄວ້າວິທະຍາສາດຕ່າງໆທັງພາຍໃນ ແລະຕ່າງປະເທດ ເພື່ອເປັນຂໍ້ມູນສະໜອງໃນການຄົ້ນຄວ້າສິດສອນ; ນອກນັ້ນ, ຍັງໄດ້ເກັບກຳຂ່າວ, ຖ່າຍພາບ, ບັນທຶກວິດີໂອ, ບັນທຶກສຽງ, ຕັດຕໍ່ຄຣິບສຽງ ແລະຄຸ້ມຄອງເວັບໄຊສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ “ເຊິ່ງສາມາດຖ່າຍພາບການເຄື່ອນໄຫວໄດ້ທັງໝົດ 459 ຄັ້ງ, ບັນນາທິການຂ່າວໄດ້ 360 ຂ່າວ, ຖ່າຍວິດີໂອໄດ້ 234 ຄັ້ງ, ບັນທຶກສຽງໄດ້ 238 ຄັ້ງ, ລົງຂ່າວເວບໄຊສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໄດ້ 360 ບົດ, ສັງລວມຮູບພາບບຸກຄົນທົ່ວສະຖາບັນໄດ້ 210 ກວ່າທ່ານ ແລະຖ່າຍຮູບເຄິ່ງຄີງເພື່ອນຳມາເຮັດລະບົບການຈັດຕັ້ງ 12 ພາກສ່ວນສຳເລັດ ແລະຖ່າຍທຳຕັດຕໍ່ວິດີໂອ ສຳພາດຫົວໜ້າສະຖາບັນໃຫ້ໂຮງຮຽນພັກ ແຂວງຢຸນນານ ສປ ຈີນ ໃນການນຳໄປເຜີຍແຜ່ວຽກງານການຮ່ວມມືຕ່າງປະເທດ. ການຄຸ້ມຄອງເວບໄຊ ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດກໍໄດ້ຮັບການປັບປຸງດີຂຶ້ນ

[1] ບົດສະຫຼຸບການເຄື່ອນໄຫວວຽກງານ 3 ປີ (2021-2023) ແລະທິດທາງແຜນການ 5 ປີ 2025-2030 ຂອງສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ.

ເຊິ່ງມີຜູ້ເຂົ້າຊົມທັງໝົດ 22.013 ເທື່ອຄົນ, ສ້າງແພັດຟອມອັບເດດນິຕິກຳສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ເຂົ້າໃນເວັບໄຊ ຈຳນວນ 11 ສະບັບ”[1].

ຄຽງຄູ່ກັບຜົນສຳເລັດໃນການພັດທະນາວຽກງານຂໍ້ມູນຂ່າວສານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ກໍຍັງມີບາງດ້ານຄວນເອົາໃຈໃສ່ປັບປຸງແກ້ໄຂຕື່ມໃນຕໍ່ໜ້າດັ່ງນີ້:

1). ຄະນະພັກ, ຄະນະນຳຈຳນວນໜຶ່ງຍັງບໍ່ທັນເຂົ້າໃຈເລິກເຖິງຄວາມສຳຄັນຂອງວຽກງານຂໍ້ມູນຂ່າວສານເທົ່າທີ່ຄວນ ຈຶ່ງເຮັດໃຫ້ການນຳພາ-ຊີ້ນຳວຽກງານຂໍ້ມູນຂ່າວສານ ເປັນຕົ້ນແມ່ນຜັນຂະຫຍາຍແຜນພັດທະນາຂອງຂໍ້ມູນຂ່າວສານ, ການວາງແຜນຈັດຕັ້ງປະຕິບັດຍັງບໍ່ສອດຄ່ອງກັບສະພາບຕົວຈິງ ສະແດງອອກການຈັດຕັ້ງປະຕິບັດຍັງຊັກຊ້າ, ບໍ່ເລິກເຊິ່ງ ແລະບໍ່ທົ່ວເຖິງ.

2). ການບໍລິການຂໍ້ມູນຂ່າວສານຂົງເຂດປຶ້ມ, ເອກະສານ ແລະອື່ນໆຍັງບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງ; ຊັບພະຍາກອນຂໍ້ມູນຂ່າວສານທີ່ມີໃນຫໍສະໝຸດ ຍັງມີຈຳນວນຈຳກັດ; ຮູບແບບການບໍລິການຂໍ້ມູນຂ່າວສານຍັງບໍ່ທັນມີຫຼາຍຮູບແບບ ເຊິ່ງໄລຍະຜ່ານມາມີແຕ່ຮູບການຢືມ-ສົ່ງຜ່ານປ່ອງບໍລິການທີ່ກຳນົດໄວ້.

3). ການຂຶ້ນແຜນງົບປະມານຈັດຊື້ປຶ້ມແລະເອກະສານເຂົ້າຫໍສະໝຸດໃນແຕ່ລະປີຍັງພົບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນມີຂອງພາກສ່ວນບໍ່ທັນໃຫ້ຄວາມຮ່ວມມືໃນການສະໜອງຕາມຄວາມຕ້ອງການຂອງພາກສ່ວນຕົນເອງເທົ່າທີ່ຄວນເຊັ່ນວ່າຢາກໄດ້ປຶ້ມຕຳລາ ຫຼື ເອກະສານຊະນິດໃດແດ່ ເຂົ້າມາໄວ້ໃນຫໍສະໝຸດທີ່ເປັນຂໍ້ມູນທີ່ເປັນປະໂຫຍດໃຫ້ແກ່ການຄົ້ນຄວ້າຂອງພາກສ່ວນຕົນເອງ, ການຈັດຊື້ປຶ້ມຕຳລາເຂົ້າຫໍສະໝຸດຕ້ອງໄດ້ສັ່ງຊື້ຈາກຫຼາຍແຫຼ່ງ ເຊິ່ງເຮັດໃຫ້ມີຄ່າໃຊ້ຈ່າຍເພີ່ມຂຶ້ນ.

4). ການຄຸ້ມຄອງຂະບວນການຈັດພິມແລະແຈກຢາຍວາລະສານຄົ້ນຄວ້າທິດສະດີການເມືອງ-ການປົກຄອງຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ. ການຈັດພິມວາລະສານ ຍັງມີຄວາມຫຍຸ້ງຍາກຊັກຊ້າ ເປັນຕົ້ນແມ່ນຂັ້ນຕອນການບັນນາທິການມີຫຼາຍຂັ້ນບາງຄັ້ງມີລັກສະນະຊັກຊ້າ, ການປັບປຸງບົດວາລະສານຂອງຜູ້ຂຽນ ຍັງບໍ່ທັນໄດ້ຮັບການເອົາໃຈໃສ່ເປັນເຈົ້າການດ້ວຍຕົນເອງ ເຮັດໃຫ້ເກີດມີສະພາບການແກ່ຍາວເວລາອອກໄປໃນການຈັດພິມ; ການແຈກຢາຍວາລະສານຕິດພັນກັບການຈັດພິມຖ້າຈັດພິມຊ້າການຈຳໜ່າຍກໍຊ້າເຊັ່ນດຽວກັນ ແລະການຈຳໜ່າຍບາງຄັ້ງຍັງບໍ່ສາມາດປະຕິບັດໄດ້ຕາມແຜນການທີ່ວາງໄວ້ຈຶ່ງເກີດມີສະພາບວາລະສານຜະລິດອອກມາແລ້ວ ແຈກຢາຍບໍ່ທ່ວງທັນກັບສະພາບການຕົວຈິງ.

5). ວຽກງານການຄົ້ນຄວ້າວິໄຈຂ່າວເປັນວຽກງານທີ່ໄດ້ກໍ່ສ້າງຂຶ້ນໃໝ່ ພະນັກງານທີ່ເຮັດໜ້າທີ່ດັ່ງກ່າວຍັງຂາດປະສົບການໃນການຄົ້ນຄວ້າວິໄຈຂ່າວ, ຍັງບໍ່ທັນມີບຸກຄະລາກອນທີ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວແລະຮຽນດ້ານນີ້ມາກ່ອນ. ຍ້ອນແນວນັ້ນ, ການປະຕິບັດໜ້າທີ່ວຽກງານແມ່ນທັງເຮັດທັງ

[1] ບົດສະຫຼຸບການເຄື່ອນໄຫວວຽກງານ 3 ປີ (2021-2023) ແລະທິດທາງແຜນການ 5 ປີ 2025-2030 ຂອງສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ.

ຖອດຖອນບົດຮຽນໄປນຳເຮັດໃຫ້ວຽກງານດັ່ງກ່າວບໍ່ທັນສາມາດປະຕິບັດພາລະບົດບາດຂອງຕົນໄດ້ຢ່າງເຕັມສ່ວນ ແລະການພົວພັນຮ່ວມມືກັບພາກສ່ວນຕ່າງໆຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.

6).ການສະໜອງຂໍ້ມູນຂ່າວສານຢູ່ໜ້າເວັບໄຊຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຍັງມີລັກສະນະຈຳກັດ ຍ້ອນການສະໜອງຂໍ້ມູນຂ່າວສານຂອງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນໃຫ້ການຮ່ວມມືຢ່າງເຕັມເມັດເຕັມໜ່ວຍເທົ່າທີ່ຄວນ, ຍັງບໍ່ທັນຕອບສະໜອງຕໍ່ຄວາມຕ້ອງການຂອງການຮຽນ-ການສອນ; ກົນໄກການຄຸ້ມຄອງເວັບໄຊ ຍັງບໍ່ທັນເປັນລະບົບທີ່ຮັດກຸມ, ຄວາມປອດໄພໃນການເກັບຮັກສາຂໍ້ມູນບໍ່ທັນສູງ, ພະນັກງານທີ່ຮັບຜິດຊອບວຽກງານພັດທະນາເວັບໄຊ ຍັງຈຳກັດດ້ານຄວາມຮູ້, ຄວາມສາມາດ ຈຶ່ງເຮັດໃຫ້ຮູບແບບ, ສີສັນຂອງໜ້າເວັບໄຊ ບໍ່ດຶງດູດຄວາມສົນໃຈຂອງຜູ້ເຂົ້າຊົມເທົ່າທີ່ຄວນ.

ເພື່ອເຮັດໃຫ້ການພັດທະນາວຽກງານຂໍ້ມູນຂ່າວສານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ດີຂຶ້ນໃນຕໍ່ໜ້າຄວນແກ້ໄຂບາງດ້ານດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນຳຄວນເພີ່ມທະວີສຶກສາວຽກງານຂໍ້ມູນຂ່າວສານໃຫ້ເລິກເຊິ່ງ, ວາງແຜນການງານນຳພາ-ຊີ້ນຳວຽກງານຂໍ້ມູນຂ່າວສານຕິດພັນກັບແຜນພັດທະນາຂອງຂໍ້ມູນຂ່າວສານການເມືອງ ແລະປົກຄອງ, ສອດຄ່ອງກັບສະພາບຕົວຈິງ ແລະເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານຂອງສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະຕິດຕາມ, ກວດກາການເຄື່ອນໄຫວຢ່າງເປັນປົກກະຕິ.

ສອງ, ປັບປຸງວຽກງານສະໝຸດໃຫ້ເປັນແຫຼ່ງຮຽນຮູ້ທີ່ມີປະສິດທິພາບ ໂດຍມີການບໍລິຫານ ແລະບໍລິການດ້ວຍລະບົບເຕັກໂນໂລຊີຂໍ້ມູນຂ່າວສານທີ່ທັນສະໄໝ ເພື່ອພັດທະນາໄປສູ່ຫໍສະໝຸດດິຈິຕ້ອນໃນອະນາຄົດຄວນນຳສົ່ງພະນັກງານໄປເຝິກອົບຮົມ, ແລກປ່ຽນບົດຮຽນເພື່ອສ້າງວິໄສທັດຂອງວຽກງານດັ່ງກ່າວເພື່ອໃຫ້ເຂົາເຈົ້າໄດ້ນຳມາປັບປຸງວຽກງານຫໍສະໝຸດໃຫ້ມີຂໍ້ມູນຂ່າວສານທີ່ຫຼາກຫຼາຍ, ມີການບໍລິການທີ່ສະດວກ, ວ່ອງໄວ, ທັນສະພາບການຕາມທິດທັນເອົາຜູ້ຮຽນເປັນໃຈກາງ ແລະສະແຫວງຫາຄວາມຮູ້ດ້ວຍຕົນເອງຢ່າງຕໍ່ເນື່ອງ.

ສາມ, ການຂຶ້ນແຜນງົບປະມານຈັດຊື້ປຶ້ມ ແລະເອກະສານຕ່າງໆເຂົ້າຫໍສະໝຸດຄວນກຳນົດໃນແຜນໃຫ້ຊັດເຈນ ແລະເຮັດແບບຟອມສອບຖາມຄວາມຕ້ອງການຂໍ້ມູນຂ່າວສານຈາກພະນັກງານ, ຄູ-ອາຈານ ແລະນັກສຶກສາ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງການຄົ້ນຄວ້າວິທະຍາສາດ ແລະການຮຽນ-ການສອນ. ນອກນັ້ນ, ຍັງເປັນການສ້າງເງື່ອນໄຂຄວາມສະດວກທີ່ຊັດເຈນຕໍ່ກັບຜູ້ຈຳໜ່າຍປຶ້ມ ແລະງົບປະມານ.

ສີ່, ປັບປຸງການປະສານງານ, ການຈັດພິມ, ການແຈກຢາຍວາລະສານເພື່ອໃຫ້ມີຄວາມກົມກຽວ ແລະບັນຈຸພະນັກງານຕື່ມໃນຂົງເຂດແຈກຢາຍເພື່ອໃຫ້ວຽກມີຄວາມສົມດູນກັບພະນັກງານຕົວຈິງ; ຄຸ້ມຄອງວາລະສານດ້ວຍການນຳໃຊ້ເຄື່ອງມືໃນການວິເຄາະ ແລະສ້າງວັດທະນະທຳການເຮັດວຽກເປັນທີມການແລກປ່ຽນຂໍ້ມູນ ລະຫວ່າງ ຄະນະບັນນາທິການດ້ວຍກັນ ເພື່ອໃຫ້ເນື້ອໃນຂອງບົດວາລະສານອຸດົມສົມບູນ, ສອດຄ່ອງກັບ

ແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍຂອງລັດ. ຫຼາຍຂຶ້ນກວ່າເກົ່າ ແລະເຮັດໃຫ້ບົດມີຄຸນນະພາບສູງຂຶ້ນເກົ່າ ຂຶ້ນແຜນແລກປ່ຽນບົດຮຽນກ່ຽວກັບວຽກງານວາລະສານກັບພາກສ່ວນຕ່າງໆຢ່າງເປັນປົກກະຕິ ເພື່ອຖອດຖອນບົດຮຽນອັນໜັກແໜ້ນໃຫ້ກັບຄະນະບັນນາ. ນອກນັ້ນ, ຄວນໂຄສະນາເຜີຍແຜ່, ເຮັດແຈ້ງການ ເພື່ອເປັນການກະຕຸກຊຸກຍູ້ການຂຽນບົດໃຫ້ເປັນຂະບວນຟົດຟື້ນ.

ຫ້າ, ວຽກງານຄົ້ນຄວ້າວິໄຈຂ່າວ ຄວນເອົາໃຈໃສ່ປະຕິບັດລະບອບປະຊຸມຖອດຖອນບົດຮຽນວຽກງານຄົ້ນຄວ້າວິໄຈຂ່າວຢ່າງໜ້ອຍ 1 ຄັ້ງຕໍ່ປີ, ສືບຕໍ່ກໍ່ສ້າງ-ບຳລຸງພະນັກງານຄົ້ນຄວ້າວິໄຈຂ່າວໃຫ້ເປັນລະບົບຄົບຊຸດ ເປັນຕົ້ນແມ່ນການຂຶ້ນແຜນກໍ່ສ້າງພະນັກງານກ່ຽວກັບຄົ້ນຄວ້າວິໄຈຂ່າວ ດ້ວຍການສົ່ງໄປຍົກລະດັບດ້ານວິຊາສະເພາະທັງພາຍໃນ ແລະຕ່າງປະເທດຢ່າງຕໍ່ເນື່ອງ. ສ້າງແຜນການ, ແຜນງານ ແລະໂຄງການລະອຽດໃນແຕ່ລະໄລຍະ; ຄົ້ນຄວ້າແກ້ໄຂວຽກງານຢ່າງມີຈຸດສຸມ ແລະມີເປົ້າໝາຍ ພ້ອມທັງຄາດຄະເນສະພາບການໃນຕໍ່ໜ້າຢ່າງພາວະວິໄສ.

ຫົກ, ປັບປຸງລະບົບການຈັດຕັ້ງຂອງຄະນະຮັບຜິດຊອບການຄຸ້ມຄອງ ແລະພັດທະນາເວັບໄຊຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໃຫ້ເປັນລະບົບຊຸດ ແບ່ງໜ້າທີ່ຄວາມຮັບຜິດຊອບຢ່າງຊັດເຈນ, ໂດຍສະເພາະແມ່ນປັບປຸງໂຄງສ້າງຂອງເວັບໄຊເປັນລະບົບຄົບຖ້ວນ, ຂໍ້ມູນສະໜອງລົງເວັບໄຊໃຫ້ມີຄວາມອຸດົມສົມບູນທາງດ້ານເນື້ອໃນ ແລະມີບ່ອນອີງຂອງຂໍ້ມູນທີ່ໜ້າເຊື່ອຖືໄດ້ ສ້າງເງື່ອນໄຂໃຫ້ພະນັກງານວິຊາການໃຫ້ມີໂອກາດໄດ້ພັດທະນາຄວາມຮູ້ທາງດ້ານເວັບໄຊ ທັງຢູ່ພາຍໃນ ແລະຕ່າງປະເທດຕາມເງື່ອນໄຂຕົວຈິງ, ສິ່ງສຳຄັນສະໜອງງົບປະມານ ແລະເຄື່ອງອຸປະກອນໄອທີທີ່ຈຳເປັນເພື່ອນຳໃຊ້ເຂົ້າໃນວຽກງານເວັບໄຊໃຫ້ພຽງພໍກັບຄວາມຕ້ອງການຂອງວຽກງານໃນແຕ່ລະໄລຍະ.

ສັງລວມແລ້ວ, ການພັດທະນາວຽກງານຂໍ້ມູນຂ່າວສານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດທາງຄະນະພັກ, ຄະນະນຳໄດ້ເຮັດໜ້າທີ່ ແນະນຳເຜີຍແຜ່ແນວທາງນະໂຍບາຍຕ່າງໆຂອງພັກ, ກົດໝາຍ ແລະລະບຽບການຕ່າງໆຂອງລັດ ໂດຍອີງຕາມການຫັນປ່ຽນຂອງແຕ່ລະໄລຍະ, ແຕ່ລະບາດກ້າວ, ແຕ່ລະສະໄໝຂອງການປະຕິວັດປັດຈຸບັນການເຂົ້າເຖິງຂໍ້ມູນຂ່າວສານໄດ້ມີສິ່ງອຳນວຍຄວາມສະດວກຫຼາຍຂຶ້ນເຮັດໃຫ້ພະນັກງານ, ຄູ-ອາຈານ ແລະນັກສຶກສາຊົມໃຊ້, ບໍລິການຜ່ານອິນເຕີເນັດ ແລະຖານຂໍ້ມູນອອນໄລນ໌ເຮັດໃຫ້ການຄົ້ນຄວ້າ, ການຮຽນຮູ້ມີຄວາມຫຼາກຫຼາຍ ແລະສົມບູນຫຼາຍຂຶ້ນ.

# ຊົມເຊີຍວັນສື່ມວນຊົນແຫ່ງຊາດ ແລະການພິມຈຳໜ່າຍ

# ການຈັດຕັ້ງປະຕິບັດວຽກງານຂອງສະຫະພັນແມ່ຍິງຮາກຖານ ສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ

ຂຽນໂດຍ: ປທ. ນ. ພາວັນ ວິລະວົງ

ພັກ-ລັດເຮົາຍາມໃດກໍໃຫ້ຄວາມສຳຄັນ, ເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງສະຫະພັນແມ່ຍິງລາວ ກໍຄືເອື້ອຍນ້ອງແມ່ຍິງລາວໃຫ້ໄດ້ຮັບການສຶກສາອົບຮົມ, ກໍ່ສ້າງ-ບຳລຸງ ແລະເຄື່ອນໄຫວວຽກງານຂອງຕົນບົນພື້ນຖານການເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ, ຂອງແມ່ຍິງລາວ, ແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບການຕ່າງໆ; ຮັບຮູ້ແມ່ຍິງລາວຖືເປັນ "ສັນຍາລັກ", ເປັນ "ຜູ້ສືບທອດ ແລະເສີມຂະຫຍາຍ" ວັດທະນະທຳອັນດີງາມຂອງຊາດລາວເຮົາ, ມີຄວາມອ່ອນໂຍນ, ໂອບເອື້ອອາລີ, ອົດທົນ, ດຸໝັ່ນຂະຫຍັນພຽນ, ເປັນຜູ້ພິລາດອາດຫານສ້າງວິລະກຳອັນມະຫັດສະຈັນໄວ້ໃນສະໄໝຕໍ່ສູ້ກູ້ຊາດ ແລະມີຫົວຄິດປະດິດສ້າງ. ໃນໄລຍະສ້າງສາພັດທະນາປະເທດຊາດ ເຊິ່ງຖືກຂະໜານນາມໃຫ້ເປັນ "ນັກຕໍ່ສູ້ທີ່ທໍ່ລະຫົດ" ແລະອົດທົນກ້າຫານປະດິດສ້າງ ໄປສູ່ຄວາມກ້າວໜ້າທັນສະໄໝຢ່າງບໍ່ຢຸດຢັ້ງ "ສົມຄວນໃຫ້ຂະໜານນາມວ່າແມ່ຍິງລາວ ເປັນແມ່ຍິງລາວວິລະຊົນ ມີຄວາມອ່ອນໂຍນ, ສຸຂຸມ ແຕ່ບໍ່ອ່ອນແອ... ແມ່ຍິງລາວເຮົາຮູ້ແກ້ໄຂຄວາມເປັນອັນຕະລາຍ ແຕ່ບໍ່ທຳລາຍຄວາມຮູ້ສຶກ..."[1]; ພ້ອມກັນນັ້ນ, ກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII ໄດ້ຢັ້ງຢືນວ່າ: "ບ່ອນໃດທີ່ມີການຈັດຕັ້ງສະຫະພັນແມ່ຍິງທີ່ເຂັ້ມແຂງ, ໜັກແໜ້ນ ບ່ອນນັ້ນສາມາດປະຕິບັດພາລະບົດບາດ ແລະໜ້າທີ່ຂອງຕົນໄດ້ຢ່າງມີຜົນສຳເລັດ; ເອື້ອຍນ້ອງແມ່ຍິງຍັງໄດ້ປະຕິບັດໜ້າທີ່ສຳຄັນໃນການເບິ່ງແຍງ, ອົບຮົມບົ່ມສອນລູກຫຼານ, ເຕົ້າໂຮມຄວາມສາມັກຄີ, ສ້າງສະຖາບັນຄອບຄົວໃຫ້ມີຄວາມຜາສຸກ"[2].

ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ຍັງໄດ້ເນັ້ນໜັກຕື່ມວ່າ: "ສະຫະພັນແມ່ຍິງລາວແຕ່ລະຂັ້ນ ຍັງຕ້ອງກາຍເປັນເບົ້າຫຼໍ່ແຫ່ງການສ້າງ, ເຝິກຝົນຫຼໍ່ຫຼອມຖັນແຖວພະນັກງານໜຸ່ມ ແລະເພດຍິງໃຫ້ມີຄວາມໜັກແໜ້ນດ້ານການເມືອງ ແລະເຕີບໃຫຍ່ໃນການນຳພາຕົວຈິງ ເພື່ອສະໜອງບຸກຄະລາກອນ ປະຕິວັດຮຸ່ນສືບທອດທີ່ມີຄຸນນະພາບໃຫ້ແກ່ການຈັດຕັ້ງພັກແຕ່ລະຂັ້ນ"[3].

ດັ່ງນັ້ນ, ການປັບປຸງວຽກງານສະຫະພັນແມ່ຍິງ ເວົ້າລວມ, ເວົ້າສະເພາະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດ ໄກສອນ ພົມວິຫານ (ສຍ.ສຂມປ-

(1) ບົດໂອ້ລົມຂອງພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ຕໍ່ກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວຄັ້ງທີ VIII, ປີ 2021, ໜ້າ 6.

(2) ກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດຄັ້ງທີ VIII, ປີ 2021, ໜ້າ 108.

(3) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 79.

ສບຫ) ແມ່ນແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງສະຫະພັນແມ່ຍິງສາມາດເຄື່ອນໄຫວນຳພາ-ຊີ້ນຳ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີແມ່ຍິງພາຍໃນຮາກຖານເຂົ້າຮ່ວມທຸກຂະບວນການ, ຮັບປະກັນເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະສະຫະພັນແມ່ຍິງເຂັ້ມແຂງໃນທຸກດ້ານຄື: ການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນວິທີນຳພາການເຄື່ອນໄຫວວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ, ຮັບປະກັນໃຫ້ສະມາຊິກຂອງຕົນໄດ້ຮັບການພັດທະນາໃນທຸກດ້ານຢ່າງເປັນຮູບປະທຳ.

ສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ເປັນຮາກຖານທີ່ມີສະມາຊິກແມ່ຍິງກວມເອົາ 2 ຂົງເຂດຄື: ສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານມີບົດບາດຕົ້ນຕໍໃນການບໍລິການຂໍ້ມູນຂ່າວສານ ແລະຄົ້ນຄວ້າ, ເຜີຍແຜ່, ສິດສອນວິຊາແນວຄິດໄກສອນ ພົມວິຫານ, ພາຍໃຕ້ການນຳພາ-ຊີ້ນຳໂດຍກົງຮອບດ້ານຈາກຄະນະບໍລິຫານງານສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ, ຄະນະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານໃນຖານະທີ່ເປັນຮາກຖານພື້ນຖານໃນການຈັດຕັ້ງປະຕິບັດວຽກງານໄດ້ເຕົ້າໂຮມຄວາມສາມັກຄີແມ່ຍິງພາຍໃນຮາກຖານໃຫ້ມີຄວາມໜັກແໜ້ນ ແລະເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ ແລະສາມາດເປັນຕົວນຳພາຂະບວນການເຄື່ອນໄຫວວຽກງານໃຫ້ມີຜົນສຳເລັດ. ຜ່ານການຈັດຕັ້ງປະຕິວຽກງານຕາມພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນເຂົ້າໃນຂະບວນການຕ່າງໆຂອງກົມກອງ, ການຈັດຕັ້ງປະຕິບັດວຽກງານສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໃນສະໄໝຜ່ານມາສາມາດຍາດໄດ້ຜົນສຳເລັດດັ່ງນີ້:

1). ວຽກງານສຶກສາອົບຮົມການເມືອງ-ແນວຄິດ. ນັບແຕ່ປີ 2019-2023 ສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ໄດ້ຖືເອົາວຽກງານການເມືອງ-ແນວຄິດເປັນວຽກງານທີ່ສຳຄັນ ແລະຖືເອົາການດຳເນີນຊີວິດການເມືອງເປັນການຕີລາຄາຖອດຖອນບົດຮຽນໃນແຕ່ລະໄລຍະ, ພ້ອມທັງຊຸກຍູ້ໃຫ້ເອື້ອຍນ້ອງແມ່ຍິງພາຍໃນຮາກຖານເຂົ້າຮ່ວມເຊື່ອມຊຶມ ແລະຮັບຟັງປະຖະກະຖາເອກະສານຕ່າງໆໃນວັນສຳຄັນຂອງພັກ, ຂອງຊາດທີ່ທາງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຈັດຂຶ້ນໄດ້ 66 ຄັ້ງ, ມີເອື້ອຍນ້ອງແມ່ຍິງເຂົ້າຮ່ວມທັງໝົດ 439 ເທື່ອຄົນ, ຜ່ານການເຂົ້າຮ່ວມເຊື່ອມຊຶມໄດ້ເຮັດໃຫ້ເອື້ອຍນ້ອງແມ່ຍິງພາຍໃນຮາກຖານມີຄວາມເປັນເອກະພາບສູງຕໍ່ແນວທາງຂອງພັກ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຮູ້ຈຳແນກມິດສັດຕູ ແລະຮັກສາໄດ້ມູນເຊື້ອອັນດີງາມຂອງແມ່ຍິງລາວ.

2). ວຽກງານປັບປຸງການຈັດຕັ້ງ ແລະ

ວຽກງານກໍ່ສ້າງ-ບຳລຸງສະມາຊິກສະຫະພັນແມ່ຍິງ.

+ ວຽກງານປັບປຸງການຈັດຕັ້ງ: "ຄະນະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານຄັ້ງທີ I ໃນວັນທີ 24 ມິຖຸນາ 2020 ປະກອບມີ 3 ສະຫາຍ; ມີສະມາຊິກແມ່ຍິງທັງໝົດ 18 ສະຫາຍ (ກຳລັງສຶກສາທັງໝົດ 3 ສະຫາຍ; ໃນນີ້, ລະບົບປະລິນຍາເອກຢູ່ ສສ ຫວຽດນາມ ຈຳນວນ 2 ສະຫາຍ ແລະລະບົບປະລິນຍາໂທຢູ່ ສປ ຈີນ ຈຳນວນ 1 ສະຫາຍ); ໃນນັ້ນ, ດ້ານວິຊາສະເພາະປະລິນຍາຕີ ຈຳນວນ 11 ສະຫາຍ, ປະລິນຍາໂທ ຈຳນວນ 6 ສະຫາຍ, ປະລິນຍາເອກຈຳນວນ 1 ສະຫາຍ; ດ້ານລະດັບທິດສະດີ: ຂັ້ນສູງ ຈຳນວນ 1 ສະຫາຍ, ຂັ້ນກາງ ຈຳນວນ 2 ສະຫາຍ, ຂັ້ນຕົ້ນ ຈຳນວນ 6 ສະຫາຍ, ບຳລຸງທິດສະດີ 45 ວັນ ຈຳນວນ 3 ສະຫາຍ, ຍັງບໍ່ຜ່ານລະດັບທິດສະດີ ຈຳນວນ 6 ສະຫາຍ. ສຳລັບຕຳແໜ່ງບໍລິຫານຂັ້ນກົມ ຈຳນວນ 2 ສະຫາຍ ເທົ່າກັບ 11,2%, ຂັ້ນພະແນກ ຈຳນວນ 6 ສະຫາຍ ເທົ່າກັບ 33,3% ແລະພະນັກງານວິຊາການ ຈຳນວນ 10 ສະຫາຍ ເທົ່າກັບ 55,5%.

+ ວຽກງານກໍ່ສ້າງ ແລະບຳລຸງພະນັກງານ. ໃນໄລຍະຜ່ານມາເອື້ອຍນ້ອງແມ່ຍິງທີ່ເປັນພະນັກງານ, ຄູ-ອາຈານ ໄດ້ເອົາໃຈໃສ່ປະຕິບັດວຽກງານວິຊາສະເພາະເປັນຕົ້ນແມ່ນຂຶ້ນຫ້ອງສິດສອນໄດ້ 2.102 ຊົ່ວໂມງ, ຄົ້ນ

ຄວ້າຂຽນບົດວິທະຍາສາດໄດ້ 6 ບົດ, ຂຽນບົດລົງວາລະສານໄດ້ 42 ບົດ; ຂຽນປຶ້ມຫຼັກສູດເຊັ່ນ: ຂັ້ນຕົ້ນໄດ້ 1 ບົດ, ຂັ້ນກາງໄດ້ 5 ບົດ. ຊີ້ນຳບົດປ້ອງກັນຈົບຊັ້ນ ແລະວິທະຍານິພົນໄດ້24ບົດ, ຕິລາຄາບົດນ້ອຍປະລິນຍາໂທໄດ້ 43ບົດ. ຜ່ານການເຄື່ອນໄຫວໃນການປະກອບສ່ວນຂອງສະມາຊິກແມ່ຍິງໃນການປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມານັ້ນ ເຮັດໃຫ້ສະມາຊິກແມ່ຍິງພາຍໃນຮາກຖານຫຼາຍສະຫາຍໄດ້ຮັບໂອກາດໄປພັດທະນາຄວາມຮູ້, ຄວາມສາມາດໃນລະດັບຕ່າງໆທີ່ແຕກຕ່າງກັນຄື: ໄປຍົກລະດັບທິດສະດີຂັ້ນຕົ້ນລະບົບ 3 ເດືອນ ຈຳນວນ 5 ສະຫາຍ ແລະຂັ້ນກາງ6 ເດືອນ ຈຳນວນ 1 ສະຫາຍ ຮຽນພາຍໃນ ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໄປຍົກລະດັບດ້ານວິຊາສະເພາະທັງໝົດ 5 ສະຫາຍ; ໃນນີ້, ຢູ່ມະຫາວິທະຍາໄລແຫ່ງຊາດລະບົບປະລິນຍາຕີ ຈຳນວນ 1 ສະຫາຍ; ຢູ່ ສສ ຫວຽດນາມ 3 ສະຫາຍຄື: ລະບົບປະລິນຍາເອກ ຈຳນວນ 2 ສະຫາຍ ແລະລະບົບປະລິນຍາໂທ ຈຳນວນ 1 ສະຫາຍ; ຢູ່ ສປ ຈີນ ລະບົບປະລິນຍາໂທ ຈຳນວນ 1 ສະຫາຍ. ນອກຈາກນັ້ນ, ກໍຍັງໄດ້ເຂົ້າຮ່ວມເຝິກອົບຮົມວຽກງານຕ່າງໆເຊັ່ນ: ເຝິກອົບຄູການເມືອງ-ການປົກຄອງລະບົບ 3 ເດືອນ ຈຳນວນ 1 ສະຫາຍ ຢູ່ພາຍໃນສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ແລະເຝິກອົບຮົມວຽກງານແມ່ຍິງຢູ່ສສ ຫວຽດນາມໄລຍະ 2 ເດືອນ ຈຳນວນ 1 ສະຫາຍ; ເຂົ້າຮ່ວມເຝິກອົບຮົມພາສາຈີນ ແລະພາສາອັງກິດ ໄລຍະ 6 ເດືອນ ຈຳນວນ 4 ສະຫາຍ; ເຝິກອົບຮົມໄລຍະສັ້ນ ຢູ່ພາຍໃນ

ແລະພາຍນອກສະຖາບັນ ຈຳນວນ 23 ຄັ້ງ, 28 ເທື່ອສະຫາຍ. ສະມາຊິກແມ່ຍິງໄດ້ໄປທັດສະນະແລກປ່ຽນບົດຮຽນຮ່ວມກັບອົງການຈັດຕັ້ງມະຫາຊົນຮາກຖານໄດ້ 7 ຄັ້ງ ຈຳນວນ 78 ເທື່ອສະຫາຍ ແລະໄປແລກປ່ຽນບົດຮຽນຢູ່ ສສ ຫວຽດນາມ 3 ຄັ້ງ ຈຳນວນ 7 ເທື່ອຄົນ. ພ້ອມກັນນັ້ນ, ຄະນະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານໄດ້ປະກອບຄຳຄິດຄຳເຫັນໃຫ້ສະມາຊິກແມ່ຍິງທີ່ມີຄວາມຫ້າວຫັນ, ໂດດເດັ່ນ ເພື່ອພິຈາລະນາເປັນເປົ້າໝາຍເຂົ້າເປັນສະມາຊິກພັກຄື: ສະເໜີເຂົ້າເປັນເປົ້າໝາຍ ຈຳນວນ 3 ສະຫາຍ, ຮຽນສະໜັບສະໜູນ ຈຳນວນ 5 ສະຫາຍ, ຮຽນກົດລະບຽບພັກ ຈຳນວນ 7 ສະຫາຍ, ເຂົ້າເປັນສະມາຊິກພັກສຳຮອງ ຈຳນວນ 7 ສະຫາຍ ແລະເລື່ອນເປັນສະມາຊິກພັກສົມບູນ 6 ສະຫາຍ”(1).

3). ວຽກງານນະໂຍບາຍ-ຍ້ອງຍໍ.

- ສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານໄດ້ເອົາໃຈໃສ່ເບິ່ງແຍງຊ່ວຍເຫຼືອ ແລະປະຕິບັດນະໂຍບາຍຕໍ່ສະມາຊິກແມ່ຍິງໃນເວລາທີ່ພົບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນເວລາເຈັບເປັນ, ເກີດລູກ ແລະອື່ນໆສາມາດປະຕິບັດໄດ້ 7ຄັ້ງ ເປັນຈຳນວນເງິນທັງໝົດ 1.050.000 ກີບ.

- ວຽກງານຍ້ອງຍໍ: ເອື້ອຍນ້ອງແມ່ຍິງພາຍໃນຮາກຖານໄດ້ຮັບການຄັດເລືອກເປັນພະນັກງານດີເດັ່ນ ແລະຄູດີເດັ່ນດັ່ງນີ້:

ສົກປີ 2019-2020 ເອື້ອຍນ້ອງແມ່ຍິງພາຍໃນຮາກຖານທັງໝົດ 18 ສະຫາຍ ໄດ້ຮັບການຍ້ອງຍໍພະນັກງານດີເດັ່ນ ຈຳນວນ 13 ສະຫາຍ; ໃນນີ້, ປະເພດ I ຈຳນວນ 4 ສະຫາຍ, ປະເພດ II ຈຳນວນ 7 ສະຫາຍ, ປະເພດ III ຈຳນວນ 2 ສະຫາຍ. ໄດ້ຮັບການຍ້ອງຍໍປະເພດຄູສອນດີ-ສອນເກັ່ງ ປະເພດ 1 ຈຳນວນ 3 ສະຫາຍ; ບໍ່ໄດ້ປະເມີນ ຈຳນວນ2 ສະຫາຍ (ໄປຮຽນຕໍ່).

ສົກປີ 2020-2021 ເອື້ອຍນ້ອງແມ່ຍິງພາຍໃນຮາກຖານທັງໝົດ 17 ສະຫາຍ ໄດ້ຮັບການຍ້ອງຍໍພະນັກງານດີເດັ່ນ ຈຳນວນ 12 ສະຫາຍ; ໃນນີ້, ປະເພດ I ຈຳນວນ 7 ສະຫາຍ, ປະເພດ II ຈຳນວນ 5 ສະຫາຍ. ໄດ້ຮັບການຍ້ອງຍໍປະເພດຄູສອນດີ-ສອນເກັ່ງ ຈຳນວນ 2 ສະຫາຍ; ໃນນີ້, ປະເພດ I ຈຳນວນ 1 ສະຫາຍ, ປະເພດ II ຈຳນວນ 1 ສະຫາຍ. ບໍ່ໄດ້ປະເມີນ ຈຳນວນ 2 ສະຫາຍ (ໄປຮຽນຕໍ່).

ສົກປີ 2021-2022 ເອື້ອຍນ້ອງແມ່ຍິງພາຍໃນຮາກຖານທັງໝົດ 18 ສະຫາຍ ໄດ້ຮັບການຍ້ອງຍໍພະນັກງານດີເດັ່ນ ຈຳນວນ 10 ສະຫາຍ; ໃນນີ້, ປະເພດ I ຈຳນວນ 8 ສະຫາຍ, ປະເພດ II ຈຳນວນ 1 ສະຫາຍ, ປະເພດ III ຈຳນວນ 1 ສະຫາຍ; ບໍ່ໄດ້ປະເມີນຈຳນວນ 6 ສະຫາຍ (ໄປຮຽນຕໍ່ 4 ສະຫາຍ, ຈົບມາໃໝ່ 1 ສະຫາຍ, ຍົກຍ້າຍມາໃໝ່ 1ສະຫາຍ); ໄດ້ຮັບການຍ້ອງຍໍປະເພດຄູສອນດີ-ສອນເກັ່ງ ປະເພດ I ຈຳນວນ 1 ສະຫາຍ (ບໍ່ໄດ້ປະເມີນ 1 ສະຫາຍ).

ສົກປີ 2022-2023 ເອື້ອຍນ້ອງແມ່ຍິງພາຍໃນຮາກຖານທັງໝົດ 18 ສະຫາຍ ໄດ້

(1) ບົດລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ, ປີ 2024, ໜ້າ 3-4.

ຮັບການຍ້ອງຍໍພະນັກງານດີເດັ່ນ ຈຳນວນ 10 ສະຫາຍ; ໃນນີ້, ປະເພດ I ຈຳນວນ 5 ສະຫາຍ, ປະເພດ II ຈຳນວນ 4 ສະຫາຍ, ປະເພດ III ຈຳນວນ 1 ສະຫາຍ; ບໍ່ໄດ້ປະເມີນ ຈຳນວນ 6 ສະຫາຍ (ໄປຮຽນຕໍ່ 4 ສະຫາຍ, ບໍ່ຜ່ານເງື່ອນໄຂປະເມີນ 2 ສະຫາຍ). ໄດ້ຮັບການຍ້ອງຍໍປະເພດຄູສອນດີ-ສອນເກັ່ງປະເພດ I ຈຳນວນ 1 ສະຫາຍ; ບໍ່ຜ່ານເງື່ອນໄຂປະເມີນ I ສະຫາຍ.

4). ວຽກງານປົກປ້ອງສິດ ແລະຜົນປະໂຫຍດຂອງແມ່ຍິງ-ເດັກນ້ອຍ, ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະການສົ່ງເສີມຄວາມສະເໝີພາບ ລະຫວ່າງຍິງ-ຊາຍ.

ຄະນະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ໄດ້ປະຕິບັດໜ້າທີ່ຕາມພາລະບົດບາດ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະເດັກນ້ອຍ ໂດຍໄດ້ເອົາໃຈໃສ່ສຶກສາອົບຮົມລູກຫຼານຂອງຕົນໃຫ້ເປັນຄົນດີ, ຫ່າງໄກຢາເສບຕິດບໍ່ຕົກເປັນເຫຍື່ອຂອງການຄ້າປະເວນີ; ພ້ອມກັນນັ້ນ, ພວກເຮົາໄດ້ເອົາໃຈໃສ່ຕິດຕາມຢ້ຽມຢາມຖາມຂ່າວ ແລະໃຫ້ຄຳປຶກສາແກ່ເອື້ອຍນ້ອງທີ່ພົບບັນຫາຫຍຸ້ງຍາກໃນການປະຕິບັດໜ້າທີ່ວຽກງານ ແລະຄວາມຫຍຸ້ງຍາກໃນຄອບຄົວ ເພື່ອພ້ອມກັນແກ້ໄຂໃຫ້ທັນເວລາ. ຄຽງຄູ່ກັນນັ້ນ, ຄະນະສະຫະພັນແມ່ຍິງຮາກຖານໄດ້ຖືສຳຄັນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງເຊິ່ງໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃນດ້ານຕ່າງໆໃຫ້ເອື້ອຍນ້ອງແມ່ຍິງໄດ້ປະກອບສ່ວນເຂົ້າໃນທຸກຂົງເຂດວຽກງານສະແດງອອກ "ປີ2019-2023 ມີສະມາຊິກແມ່ຍິງໄດ້ຮັບການເລື່ອນຊັ້ນຈາກພະນັກງານວິຊາການຂຶ້ນເປັນຮອງຫົວໜ້າພະແນກ ຈຳນວນ 4 ສະຫາຍ; ຈາກຮອງພະແນກຂຶ້ນເປັນຫົວໜ້າພະແນກ ຈຳນວນ 1ສະຫາຍ; ຈາກຂັ້ນຮອງຫົວໜ້າສູນຂຶ້ນເປັນຫົວໜ້າສູນ ຈຳນວນ 2 ສະຫາຍ"[1].

5). ວຽກງານພັດທະນາຊີວິດການເປັນຢູ່ເພື່ອແກ້ໄຂຄວາມທຸກຍາກຂອງແມ່ຍິງ ແລະຄອບຄົວ.

ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມສະມາຊິກແມ່ຍິງພາຍໃນຮາກຖານສ້າງລາຍຮັບເພີ່ມດ້ວຍການສ້າງເສດຖະກິດຄອບຄົວນອກໂມງລັດຖະການຖືກຕ້ອງຕາມກົດໝາຍ ແລະລະບຽບເຊັ່ນ: ສອນພາສາຕ່າງປະເທດ, ປູກຝັງ, ລ້ຽງສັດ, ຕ່ຳຫູກ, ຄ້າຂາຍເຄື່ອງຍ່ອຍ, ຂາຍເຄື່ອງອອນລາຍ, ເຮັດເຂົ້າໜົມ, ປຸງແຕ່ງອາຫານຂາຍ ແລະອື່ນໆຕາມຄວາມສາມາດ ຂອງແຕ່ລະຄອບຄົວ ເຊິ່ງເຮັດໃຫ້ຊີວິດການເປັນຢູ່ຂອງແຕ່ລະຄອບຄົວດີຂຶ້ນເທື່ອລະກ້າວ ໂດຍສະເລ່ຍຄອບຄົວໜຶ່ງມີລາຍຮັບ 3.000.000 ກີບຕໍ່ເດືອນ.

6). ວຽກງານຂໍ້ແຂ່ງຂັນ 3 ດີຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ.

ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີຂອງສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ວາງອອກໂດຍຈັດຕັ້ງເຜີຍແຜ່ເຊື່ອມຊຶມເນື້ອໃນຂໍ້ແຂ່ງຂັນ 3 ດີ (ພົນລະເມືອງດີ, ພັດທະນາດີ ແລະ

[1] ບົດລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ, ປີ 2024, ໜ້າ 3-4.

ສ້າງຄອບຄົວດີ) ແລະປະເມີນຂໍ້ແຂ່ງຂັນ 3 ດີ ໄດ້ ຈຳນວນ 4 ຄັ້ງ ຜ່ານການປະເມີນມີດັ່ງນີ້:

- ສົກປີ 2019-2020 ສະມາຊິກແມ່ຍິງພາຍໃນຮາກຖານທັງໝົດ 18 ສະຫາຍ; ໃນນັ້ນ, ໄດ້ຮັບໃບຍ້ອງຍໍແມ່ຍິງ 3 ດີຄື: ປະເພດ I ຈຳນວນ 15 ສະຫາຍ, ປະເພດ II ຈຳນວນ 2 ສະຫາຍ, ບໍ່ໄດ້ຈັດປະເພດ ຈຳນວນ 1 ສະຫາຍ (ໄປຮຽນຕໍ່).

- ສົກປີ 2020-2021 ສະມາຊິກແມ່ຍິງພາຍໃນຮາກຖານທັງໝົດ 17 ສະຫາຍ; ໃນນັ້ນ, ໄດ້ຮັບໃບຍ້ອງຍໍແມ່ຍິງ 3 ດີຄື: ປະເພດ I ຈຳນວນ 14 ສະຫາຍ, ປະເພດ II ຈຳນວນ 1 ສະຫາຍ, ບໍ່ໄດ້ຈັດປະເພດ 2 ສະຫາຍ (ໄປຮຽນຕໍ່).

- ສົກປີ 2021-2022 ສະມາຊິກແມ່ຍິງພາຍໃນຮາກຖານທັງໝົດ 18 ສະຫາຍ; ໃນນັ້ນ, ໄດ້ຮັບໃບຍ້ອງຍໍແມ່ຍິງ 3 ດີຄື: ປະເພດ I ຈຳນວນ 11 ສະຫາຍ, ປະເພດ II ຈຳນວນ 2 ສະຫາຍ, ບໍ່ໄດ້ຈັດປະເພດ 5 ສະຫາຍ (ຍົກຍ້າຍມາ 1 ສະຫາຍ ໄປຮຽນຕໍ່ 4 ສະຫາຍ).

- ສົກປີ 2022-2023 ສະມາຊິກແມ່ຍິງພາຍໃນຮາກຖານທັງໝົດ 18 ສະຫາຍ; ໃນນັ້ນ, 3 ດີ ປະເພດ I ຈຳນວນ 11 ສະຫາຍ, ປະເພດ II ຈຳນວນ 1 ສະຫາຍ, ບໍ່ໄດ້ຈັດປະເພດ 6 ສະຫາຍ (ໄປຮຽນຕໍ່ 4 ສະຫາຍ, ຮຽນຈົບໃໝ່ 1 ສະຫາຍ, ບໍ່ຜ່ານເງື່ອນໄຂປະເມີນ 1 ສະຫາຍ).

7). ວຽກງານຂະບວນການ ແລະການເຄື່ອນໄຫວນອກຫຼັກສູດ.

ຄະນະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ໄດ້ຊຸກຍູ້ໃຫ້ເອື້ອຍນ້ອງແມ່ຍິງເຂົ້າຮ່ວມຂະບວນການກິລາ-ສິລະປະວັນນະຄະດີ ແລະກິດຈະກຳຕ່າງໆທີ່ທາງຄະນະສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ແລະສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຈັດຂຶ້ນໃນແຕ່ລະປີຢ່າງເປັນຂະບວນຟົດຟື້ນເຊັ່ນ: ເຂົ້າຮ່ວມວັນສະເຫຼີມສະຫຼອງວັນແມ່ຍິງສາກົນ ວັນທີ 8 ມີນາ, ວັນສ້າງຕັ້ງສະຫະພັນແມ່ຍິງລາວ ວັນທີ 20 ກໍລະກົດ, ເຂົ້າຮ່ວມຂະບວນການກິລາກັບພາກສ່ວນຕ່າງໆພາຍໃນສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຈຳນວນ 6 ຄັ້ງ, ຂະບວນການອອກແຮງງານລວມ ຈຳນວນ 82 ຄັ້ງ, ຂະບວນການຍ່າງເພື່ອສຸຂະພາບ ແລະຂະບວນການເຕັ້ນແອໂລບິດ, ຂະບວນການແຂ່ງຂັນກິລາຊີງຂັນສາມອົງການຈັດຕັ້ງມະຫາຊົນຂັ້ນສະຖາບັນຈັດຂຶ້ນໃນແຕ່ລະປີ, ພິເສດໄດ້ສ້າງຂະບວນການຕ້ອນຮັບກອງປະຊຸມໃຫຍ່ຂອງອົງການຈັດຕັ້ງມະຫາຊົນຮາກຖານຈັດເຝິກອົບຮົມ ຫົວຂໍ້: "ທັນທັກສະທີ່ມີໃຫ້ກາຍເປັນລາຍໄດ້ (ເຮັດເຂົ້າໜົມ)" ແລະໄດ້ເຊີນແມ່ຍິງຮາກຖານອ້ອມຂ້າງເຂົ້າຮ່ວມ. ພ້ອມກັນນັ້ນ, ຍັງໄດ້ເຂົ້າຮ່ວມຂະບວນການແຂ່ງຂັນສິລະປະ-ວັນນະຄະດີທີ່ທາງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຈັດຂຶ້ນເຊິ່ງເອື້ອຍນ້ອງແມ່ຍິງໄດ້ປະກອບສ່ວນແຂ່ງຂັນບົດຟ້ອນໄດ້ 8 ຄັ້ງ ຈຳນວນ 2 ສະຫາຍ ແລະສາມາດຍາດໄດ້ລາງວັນທີ 1 ຈາກການແຂ່ງຂັນ.

ເວົ້າລວມແລ້ວ, ການເຄື່ອນໄຫວວຽກງານຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ

ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ໃນຊຸມປີຜ່ານມາແມ່ນໄດ້ຮັບການປັບປຸງແຕ່ລະໄລຍະໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງຮາກຖານ ແລະໄດ້ຮັບການນຳພາ-ຊີ້ນຳຈາກຄະນະບໍລິຫານງານສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຢ່າງໃກ້ຊິດ ເຊິ່ງສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ, ແຕ່ຄຽງຄູ່ກັນນັ້ນ, ກໍຍັງມີບາງດ້ານທີ່ຄວນເອົາໃຈໃສ່ປັບປຸງໃນຕໍ່ໜ້າດັ່ງນີ້:

1). ການນສຶກສາອົບຮົມການເມືອງ-ແນວຄິດໃຫ້ເອື້ອຍນ້ອງແມ່ຍິງພາຍໃນຮາກຖານຍັງບໍ່ທັນເຮັດໄດ້ຫຼາຍຮູບຫຼາຍສີ, ກວ້າງຂວາງທົ່ວເຖິງ ແລະບໍ່ທັນຕໍ່ເນື່ອງເທື່ອ, ດັ່ງນັ້ນ ຈຶ່ງເຮັດໃຫ້ເອື້ອຍນ້ອງແມ່ຍິງ ຈຳນວນໜຶ່ງບໍ່ທັນກຳແໜ້ນຕໍ່ແນວທາງການປ່ຽນແປງໃໝ່ຂອງພັກ, ກົດໝາຍ ແລະລະບຽບຂອງລັດ, ລະບຽບຂອງສະຫະພັນແມ່ຍິງລາວກໍຄືສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດວາງອອກ.

2). ການຊຸກຍູ້, ປຸກລະດົມເອື້ອຍນ້ອງແມ່ຍິງ ເພື່ອເອົາໃຈໃສ່ພັດທະນາຕົນເອງ, ບຸກບືນກ້າວທັນຕື່ນຕົວປະກອບສ່ວນເຂົ້າໃນການຄົ້ນຄວ້າວິທະຍາສາດ, ຂຽນປຶ້ມຕຳລາຍັງຈຳກັດ, ສະຕິຕື່ນຕົວໃນການພັດທະນາຊອກຮູ້ຮ່ຳຮຽນ ເພື່ອຍົກລະດັບຕົນເອງຍັງມີໜ້ອຍ, ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນຂອງເອື້ອຍນ້ອງແມ່ຍິງ 3 ດີ ຂອງສະຫະພັນແມ່ຍິງລາວວາງອອກ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນສະແດງອອກຍັງບໍ່ທັນມີແຜນການລະອຽດ, ຂາດການຕິດຕາມ, ກວດກາ, ມີແຕ່ປະຕິບັດຕາມທິດຊີ້ນຳຂອງຄະນະບໍລິຫານງານສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ແລ້ວຈຶ່ງປະເມີນ, ແບບແຜນວິທີເຮັດວຽກຂອງຄະນະສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນພົມວິຫານຍັງບໍ່ທັນໄດ້ຮັບການປັບປຸງເທົ່າທີ່ຄວນ ສະແດງອອກໃນເວລາຮ່ວມຊີວິດການເມືອງຍັງບໍ່ທັນໜັກແໜ້ນ ແລະເຮັດບໍ່ປົກກະຕິ, ການແກ້ໄຂປາກົດການຫຍໍ້ທໍ້ໃນແມ່ຍິງບໍ່ທັນໄດ້ດີ, ການຕຳນິກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນ ມີລັກສະນະຈິ່ງຈຽມບໍ່ກ້າສະແດງອອກ ເຊິ່ງເປັນສາເຫດເຮັດໃຫ້ການປະຕິບັດວຽກງານບໍ່ທັນມີການຫັນປ່ຽນເທົ່າທີ່ຄວນ.

3). ການວາງແຜນ ແລະສ້າງຂະບວນການແລກປ່ຽນບົດຮຽນ, ເຝິກອົບຮົມດ້ານຕ່າງໆ ທີ່ຕິດພັນກັບວິຊາສະເພາະ ໃຫ້ເອື້ອຍນ້ອງແມ່ຍິງ ຍັງເຮັດໄດ້ໜ້ອຍ ແລະບໍ່ທັນຫຼາກຫຼາຍ; ການຕິດຕາມກວດກາ ແລະຊຸກຍູ້ຂະບວນການຂອງແມ່ຍິງບໍ່ທັນເປັນປົກກະຕິ, ການເກັບກຳຂໍ້ມູນເຄື່ອນໄຫວວຽກງານຂອງເອື້ອຍນ້ອງແມ່ຍິງໃນແຕ່ລະໄລຍະຍັງບໍ່ທັນຕໍ່ເນື່ອງ, ຜົນງານເອື້ອຍນ້ອງແມ່ຍິງເຮັດຕົວຈິງໄດ້ຫຼາຍ, ແຕ່ການເກັບກຳຂໍ້ມູນ ເພື່ອສະຫຼຸບລາຍງານແມ່ນຍັງເຮັດບໍ່ທັນເຮັດໄດ້ຢ່າງຊັດເຈນ ແລະຄົບຖ້ວນ.

ເພື່ອເປັນທິດທາງປັບປຸງວຽກງານສະຫະພັນແມ່ຍິງຂອງສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນພົມວິຫານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໃນຕໍ່ໜ້າ ຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ບາງດ້ານດັ່ງນີ້:

1). ຄະນະສະຫະພັນແມ່ຍິງຮາກຖານ ສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານ ຄວນຖືເອົາການສຶກສາອົບຮົມດ້ານການເມືອງ-ແນວຄິດ ເປັນວຽກງານແຖວໜ້າ; ຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ ແລະຕໍ່ເນື່ອງ ຄວນເຮັດດ້ວຍຫຼາຍຮູບການ, ວິທີການຕິດພັນກັບການເຊື່ອມຊຶມເອກະສານຕ່າງໆ ເຊັ່ນ: ບັນດາເອກະສານທີ່ສຳຄັນຂອງພັກ-ລັດ, ຂອງສູນກາງສະຫະພັນແມ່ຍິງລາວ ກໍຄືຂອງສະຫະພັນແມ່ຍິງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດວາງອອກໃນແຕ່ລະໄລຍະໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ແລະຕິດພັນກັບໜ້າທີ່ການເມືອງຂອງສະມາຊິກແມ່ຍິງ ໂດຍສະເພາະການບໍລິການຂໍ້ມູນຂ່າວສານ, ການຂຶ້ນຫ້ອງສິດສອນ ແລະການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້ຢ່າງມີຄຸນນະພາບ ແລະມີປະສິດທິຜົນສູງ.

2). ຄະນະສະຫະພັນແມ່ຍິງຮາກຖານ ສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານຄວນເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບກັນຢ່າງລະອຽດ, ຈະແຈ້ງ; ເຮັດວຽກຢ່າງມີແຜນການ, ມີການສະຫຼຸບຕີລາຄາ, ຖອນຖອດບົດຮຽນເປັນແຕ່ລະໄລຍະ ແລະລາຍງານສ່ອງແສງໃຫ້ຂັ້ນເທິງຢ່າງເປັນປົກກະຕິ. ເປັນເຈົ້າການໃນການນຳພາຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີຕິດພັນກັບການປະຕິບັດໜ້າວິຊາສະເພາະໃຫ້ມີຄຸນນະພາບ ແລະມີປະສິດທິຜົນສູງ, ການຈັດຕັ້ງປະຕິບັດການປະເມີນແມ່ຍິງ 3 ດີແມ່ນໃຫ້ຖືກຕ້ອງຕາມຂັ້ນຕອນ ແລະລະບຽບຫຼັກການຢ່າງເຂັ້ມງວດ; ພ້ອມທັງເພີ່ມທະວີການຄຸ້ມຄອງ, ຕິດຕາມ-ກວດກາເອື້ອຍແມ່ຍິງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດຕິດແທດເພື່ອກຳໃຫ້ໄດ້ສະພາບແນວຄິດຈິດໃຈ, ຈຸດພິເສດ ແລະການເຄື່ອນໄຫວຂອງເຂົາເຈົ້າ. ພ້ອມກັນນັ້ນ, ກໍຄວນເອົາໃຈໃສ່ຕິດຕາມເກັບກຳຜົນງານຂອງເອື້ອຍນ້ອງແມ່ຍິງຜູ້ທີ່ພົ້ນເດັ່ນ, ຍົກເປັນຕົວແບບ, ຍ້ອງຍໍຊົມເຊີຍ; ສຳລັບຜູ້ທີ່ຍັງບໍ່ທັນພົ້ນເດັ່ນກໍຕ້ອງກ້າຕັດສິນໃຈຕຳນິກໍ່ສ້າງຊ່ວຍຊຸກຍູ້ເພື່ອໃຫ້ເຂົາເຈົ້າມີການຫັນປ່ຽນຢ່າງເລິກເຊິ່ງ.

3). ຄະນະສະຫະພັນແມ່ຍິງຮາກຖານ ສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນ ພົມວິຫານຄວນເອົາໃຈໃສ່ການປັບປຸງແບບແຜນວິທີເຮັດວຽກໃຫ້ມີວິທະຍາສາດ, ສອດຄ່ອງກັບສະພາບຈຸດພິເສດຂອງຮາກຖານຕົນ, ຄົ້ນຄວ້າ ແລະປຶກສາຫາລືພາຍໃນຄະນະນຳສະເໜີຂັ້ນເທິງກ່ຽວກັບຮູບແບບ ແລະເນື້ອໃນຂອງການເຝິກອົບຮົມໃຫ້ເອື້ອຍນ້ອງແມ່ຍິງໃຫ້ຫຼາກຫຼາຍ ໂດຍຖືເອົາການສ້າງຂະບວນການຕ່າງໆ ຕິດພັນກັບການຮຽນ-ການສອນ ແລະການຄົ້ນຄວ້າວິທະຍາສາດ. ນຳພາ-ຊີ້ນຳການເຄື່ອນໄຫວປະຕິບັດວຽກງານຮອບດ້ານຂອງສະຫະພັນແມ່ຍິງພາຍໃນຮາກຖານໃຫ້ມີຄວາມເປັນເອກະພາບທາງດ້ານແນວຄິດ ແລະການກະທຳຕົວຈິງ ໂດຍສະເພາະແມ່ນຂອດດຳເນີນຊີວິດການເມືອງໃຫ້ເປັນປົກກະຕິ ຕາມລະບຽບຂອງສະຫະພັນແມ່ຍິງໄດ້ກຳນົດໄວ້ ເພື່ອເກັບກຳຜົນງານຕົວຈິງ.

ສັງລວມແລ້ວ, ການປັບປຸງວຽກງານ

ສະຫະພັນແມ່ຍິງຮາກຖານສູນຂໍ້ມູນຂ່າວສານການເມືອງ ແລະການປົກຄອງ ແລະສູນຄົ້ນຄວ້າແນວຄິດໄກສອນພົມວິຫານຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດແມ່ນຄວາມຈຳເປັນພາວະວິໄສ ແລະເປັນວຽກອັນຮີບດ່ວນໃນການເຄື່ອນໄຫວວຽກງານແມ່ຍິງໃນແຕ່ລະດ້ານຢ່າງເປັນປົກກະຕິ, ຈັດຕັ້ງນຳພາສ້າງຂະບວນການເຄື່ອນໄຫວວຽກງານແມ່ຍິງຕາມເນື້ອໃນຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງລາວວາງອອກໃຫ້ເປັນຂະບວນຟົດຟື້ນ, ເພີ່ມທະວີໃນການສຶກສາອົບຮົມການເມືອງ-ແນວຄິດຢ່າງເປັນປົກກະຕິ, ສ້າງໃຫ້ສະມາຊິກແມ່ຍິງມີຄວາມຮັບຮູ້ ແລະເຂົ້າໃຈຕໍ່ແນວທາງ, ແຜນນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ກົດໝາຍ ແລະລະບຽບຂອງລັດ, ຂອງສະຫະພັນແມ່ຍິງລາວ, ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດກາຍເປັນກ້ອນກຳລັງອັນໜຶ່ງດຽວໃນການເຄື່ອນໄຫວພັດທະນາວຽກງານຂອງພັກ-ລັດ, ຂອງອົງການຈັດຕັ້ງສະຫະພັນແມ່ຍິງ ແລະຂອງສັງຄົມໃຫ້ມີຄວາມກ້າວໜ້າບໍ່ຢຸດຢັ້ງຕາມຈຸດໝາຍຂອງພັກ.

---

## ເພີ່ມທະວີການພົວພັນຮ່ວມມືທາງການທູດກັບຕ່າງປະເທດ ຢູ່ ສປປ ລາວ

ຂຽນໂດຍ: ແສງໄພວອນ ພັນທະພອນ

...ທີ່ພັກ-ລັດກຳນົດໄວ້ເວົ້າລວມ, ເວົ້າສະເພາະແມ່ນການປະຕິບັດແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ, ການຮ່ວມມືເພື່ອການພັດທະນາ ແລະຖືການທູດປ້ອງກັນເທດເປັນທິດສຳຄັນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດມີບາດກ້າວບຸກທະລຸໃນຫຼາຍດ້ານ, ສາມາດຮັບປະກັນໄດ້ສະຖຽນລະພາບດ້ານການເມືອງອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນ; ສ້າງສະພາບແວດລ້ອມພາຍນອກທີ່ເອື້ອອຳນວຍ ແລະຍາດແຍ່ງທຶນຮອນເຂົ້າໃນການພັດທະນາເສດຖະກິດ-ສັງຄົມນັບມື້ຫຼາຍຂຶ້ນ, ອິດທິພົນ ແລະບົດບາດຂອງປະເທດເຮົາໄດ້ຮັບການເຊີດຊູສູງເດັ່ນຂຶ້ນໃນເວທີພາກພື້ນ ແລະສາກົນຢ່າງບໍ່ຢຸດຢັ້ງ.